# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

9-16 ຕຸລາ 2025

ປີທີ 14

ສະບັບທີ 1037

ລາຍສັປະດາ


## ຜົນກອງປະຊຸມລັດຖະບານປະຈຳເດືອນກັນຍາ




(ສພຊ)-ຕອນແລງວັນທີ 10 ຕຸລານີ້ ທີ່ສຳນັກງານນາຍົກລັດຖະມົນຕີ (ສນຍ), ທ່ານ ສອນໄຊ ສີດພະໄຊ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ໂຄສົກລັດຖະບານ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນກັນຍາ 2025 ເຊິ່ງໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວ ໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 9 ຕຸລາ ແລະ ອັດລົງໃນຕອນບ່າຍວັນທີ 10 ຕຸລານີ້ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຜູ້ຕາງໜ້າກະຊວງ-ອົງການ ເຂົ້າຮ່ວມແບບເຊິ່ງໜ້າ; ການນຳຂອງນະຄອນຫຼວງວຽງຈັນ ແລະ ບັນດາ

ອ່ານຕໍ່ໜ້າ 5

## ກອງປະຊຸມ ຄປຈສພຊ ປະຈຳເດືອນກັນຍາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ປະຈຳເດືອນກັນຍາ 2025 ໄດ້ດຳເນີນໃນວັນທີ 8-9 ຕຸລາຜ່ານມາ ໂດຍການເປັນປະທານຂອງທ່ານປອ. ນາງສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການໃນ ຄປຈສພຊ, ລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍ ເປັນຕົ້ນ: ປຶກສາຫາລືຫົວຂໍ້, ວັນ,

ອ່ານຕໍ່ໜ້າ 4



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ລັດຕ້ອງຫັນເອົາແນວທາງແຜນນະໂຍບາຍຂອງພັກ ເປັນແຜນການ, ນະໂຍບາຍລະອຽດ, ເປັນມາດຕະການ ແລະ ກຳນົດໝາຍທີ່ມີລັກສະນະກົດໝາຍ, ທັງເປັນຜູ້ຈັດຕັ້ງປະຕິບັດກົດໝາຍດັ່ງກ່າວຢ່າງເຂັ້ມງວດ.

(ບົດໂອ້ລົມຂອງປະທານ ໄກສອນ ພົມວິຫານ, ກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ 7, ໜ້າ 96)

ກົດໝາຍຂອງພວກເຮົາ(ຂອງລະບອບປະຊາທິປະໄຕປະຊາຊົນ) ກໍຕ້ອງສ່ອງແສງໃຫ້ເຫັນເຖິງລັກສະນະຊົນຊັ້ນ, ລັກສະນະຊາດ ແລະ ລັກສະນະປະຊາຊົນຂອງລັດພວກເຮົາ; ສະນັ້ນ, ກົດໝາຍຕ້ອງສ່ອງແສງຢ່າງຈະແຈ້ງເຖິງໜ້າທີ່ການເມືອງຂອງພັກ, ເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນເຜົ່າຕ່າງໆແລະເປັນສິ່ງເສີມສ້າງຄວາມສັກສິດແຫ່ງການຄຸ້ມຄອງຂອງລັດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4 ໜ້າ 502)

ອ່ານຕໍ່ສະບັບໜ້າ

## ທາບທາມເລືອກຕັ້ງຜູ້ແທນສົມບູນ ແລະ ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ



(ສພຊ) - ວັນທີ 6 ຕຸລາຜ່ານມາ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຈັດກອງປະຊຸມທາບທາມເລືອກຕັ້ງຜູ້ແທນສົມບູນ ແລະ ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການ

ອ່ານຕໍ່ໜ້າ 4

## ລາຍງານຜົນໂດຍຫຍໍ້ການປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ



(ສພຊ) - ວັນທີ 10 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການລາຍງານຜົນໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ແລະການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍການເປັນປະທານ

ອ່ານຕໍ່ໜ້າ 4

## ກສຕສ ປະຊຸມຄົບຄະນະ ປະຈຳປີ 2025



(ສພຊ)-ວັນທີ 10-11 ຕຸລານີ້ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຄົບຄະນະຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ປະຈຳປີ 2025 ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສົມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ເຂົ້າຮ່ວມມີທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ບັນດາ

ອ່ານຕໍ່ໜ້າ 3







ພູມຕ້ານທານ... (ໜ້າ 9)



ສານສູງສຸດ... (ໜ້າ 11)




ຮ່ວມມືກັນກໍາຈັດສິ່ງເສບຕິດ... (ໜ້າ 12)


**ຊົມເຊີຍວັນປະກາດເອກະລາດ ແລະ ວັນສ້າງຕັ້ງການທູດລາວ ຄົບຮອບ 80 ປີ (12 ຕຸລາ 1945 - 12 ຕຸລາ 2025) ຢ່າງສຸດໃຈ!**

# ຫາລືກົນໄກປະສານງານວຽກງານຍຸຕິທຳ



(ສພຊ) - ວັນສຸກທີ 10 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມປຶກສາຫາລືກົນໄກການປະສານງານລະຫວ່າງກຳມາທິການຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ພາຍໃຕ້ການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ, ມີບັນດາທ່ານຮອງປະທານກຳມາທິການຍຸຕິທຳ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຫົວໜ້າກົມແລະຮອງຫົວໜ້າກົມ ຈາກ 4 ພາກສ່ວນດັ່ງກ່າວພ້ອມດ້ວຍພະນັກງານຈຳນວນໜຶ່ງທີ່ກ່ຽວຂ້ອງ ເຂົ້າຮ່ວມ 60 ກວ່າທ່ານ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອປຶກສາຫາລືກ່ຽວກັບການກະກຽມເນື້ອໃນຂົງເຂດຍຸຕິທຳໃຫ້ແກ່ການດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ; ສະຫຼຸບການປະຕິບັດກົນໄກການປະສານງານລະຫວ່າງກຳມາທິການຍຸຕິທຳ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ; ປຶກສາຮ່ວມກັນກ່ຽວກັບການພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳ ໂດຍສະເພາະແມ່ນບັນດາຄຳຮ້ອງທີ່ສະພາແຫ່ງຊາດ ໄດ້ນຳສົ່ງໃຫ້ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ພິຈາລະນາແກ້ໄຂ. ທັງໝົດເຫຼົ່ານັ້ນ ເພື່ອຮັບປະກັນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ໃນວຽກງານຂົງເຂດຍຸຕິທຳ ກໍຄືເພື່ອເພີ່ມທະວີການປະສານສົມທົບເຊິ່ງກັນແລະກັນໃຫ້ມີຄວາມໂລ່ງລ່ຽນ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານດັ່ງກາວໃນຕໍ່ໜ້າ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການຈັດຕັ້ງປະຕິບັດຂໍ້ຕົກລົງຮ່ວມລະຫວ່າງກຳມາທິການຍຸຕິທຳ ກັບ ອົງການໄອຍະການປະຊາຊົນສູງສຸດ, ການປະສານງານກັບສານປະຊາຊົນສູງສຸດໃນໄລຍະຜ່ານມາແລະທິດທາງໃນຕໍ່ໜ້າ; ບົດສະຫຼຸບກົນໄກການປະສານງານລະຫວ່າງກຳມາທິການຍຸຕິທຳ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການດຳເນີນຄະດີແພ່ງ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າ, ແລກປ່ຽນຄວາມຄິດເຫັນເຊິ່ງກັນແລະກັນໃນດ້ານຕ່າງໆ ຕໍ່ກັບການຈັດຕັ້ງປະຕິບັດບົດບາດຂອງຕົນ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ວິທີການແກ້ໄຂຮ່ວມກັນ ຮັບປະກັນເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ໄດ້ຮັບການປັບປຸງໃຫ້ມີຄຸນນະພາບໃໝ່ດີຂຶ້ນກວ່າເກົ່າ.

ໃນໂອກາດດັ່ງກ່າວ, ກອງປະຊຸມໄດ້ຮັບຟັງການໂອ້ລົມຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ແຕ່ລະພາກສ່ວນທີ່ໄດ້ມີຄວາມພະຍາຍາມໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ເຮັດໃຫ້ວຽກງານຂອງສະພາແຫ່ງຊາດໄດ້ຮັບການຈັດຕັ້ງປະຕິບັດຕາມແຜນການທີ່ກຳນົດໄວ້. ເພື່ອສືບຕໍ່ເຮັດໃຫ້ການປະຕິບັດວຽກງານຂອງແຕ່ລະພາກສ່ວນມີຜົນສຳເລັດ ແລະ ແກ້ໄຂໄດ້ບັນດາຈຸດອ່ອນຂໍ້ຄົງຄ້າງ, ທ່ານຍັງໄດ້ເນັ້ນໜັກໃຫ້ກອງປະຊຸມນຳໄປພິຈາລະນາໃນບາງດ້ານ ເປັນຕົ້ນ: ເອົາໃຈໃສ່ປະສານສົມທົບເຊິ່ງກັນແລະກັນ ໃນການກວດກາ ແລະ ປະເມີນຄືນບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ມີຄວາມຈຳເປັນຕ້ອງໄດ້ປັບປຸງໃຫ້ສອດຄ່ອງກັບລັດຖະທຳມະນູນສະບັບປີ 2025 ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ທັງຄົ້ນຄວ້າ, ສະເໜີສ້າງນິຕິກຳທີ່ຈຳເປັນໃຫ້ແກ່ການເຄື່ອນໄຫວວຽກງານຕົວຈິງຂອງແຕ່ລະພາກສ່ວນ; ສືບຕໍ່ຄົ້ນຄວ້າ, ສ້າງ ແລະປັບປຸງກົນໄກປະສານງານລະຫວ່າງກຳມາທິການຍຸຕິທຳ ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດວຽກງານ ກໍຄືຄວາມເປັນເອກະພາບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະອົງການ ຮັບປະກັນໄດ້ຄວາມຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ໃຫ້ຄວາມຍຸຕິທຳແກ່ປະຊາຊົນ; ເປັນເຈົ້າການຄົ້ນຄວ້າ, ປັບປຸງກົນໄກ, ແບບແຜນ ແລະ ວິທີເຮັດວຽກຂອງຕົນ ໃນການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳໃຫ້ມີຄວາມໂລ່ງລ່ຽນ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນຍຸຕິທຳ ສະບັບເລກທີ 112/ກມສພ, ລົງວັນທີ 2 ມິຖຸນາ 2020 ໃຫ້ມີໝາກຜົນຕົວຈິງ.



# ສ້າງຄວາມເຂັ້ມແຂງວຽກງານເສດຖະກິດ



(ສພຊ) - ວັນທີ 9 ຕຸລານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສຳມະນາແລະສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ທີ່ເປັນກຳມະການຂອງກຳມາທິການ ແລະ ພະນັກງານຂອງກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ(ກສຕສ) ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີແລະສິ່ງແວດລ້ອມ ເຊິ່ງມີບັນດາທ່ານຮອງປະທານກຳມາທິການຂອງ ສພຊ, ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ, ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ສສຊ ທີ່ເປັນກຳມະການຂອງກສຕສແລະແຂກຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນວ່າ: ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ, ແລກປ່ຽນຄຳຄິດຄຳເຫັນ ແນໃສ່ການຍົກສູງບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການອະນຸມັດໂຄງການລົງທຶນພັດທະນາພະລັງງານໄຟຟ້າ, ແຮ່ທາດ ແລະ ໂຄງການທີ່ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ໄດ້ຮັບການພິຈາລະນາຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເກີດຜົນປະໂຫຍດສູງສຸດ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ຫຼີກລ່ຽງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ; ສະນັ້ນ, ກອງປະຊຸມຄັ້ງນີ້ ໄດ້ກຳນົດເອົາຫົວຂໍ້ຈາກບັນຫາທີ່ພົ້ນເດັ່ນໃນສະພາບປັດຈຸບັນຂອງສັງຄົມ ເຊິ່ງປະກອບມີ 3 ຫົວຂໍ້ທີ່ຕິດພັນກັບວຽກງານໃນຂົງເຂດເສດຖະກິດ ຄື: 1) ຄວາມຈຳເປັນ ແລະ ຈຸດປະສົງໃນການປັບປຸງກົດໝາຍວ່າດ້ວຍໄຟຟ້າ ແລະ ກົດໝາຍວ່າດ້ວຍແຮ່ທາດ ທີ່ຈະນຳເຂົ້າພິຈາລະນາໃນປີ 2026, 2) ການຈັດຕັ້ງປະຕິບັດໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ (BRT), 3) ການຈັດຕັ້ງປະຕິບັດ ແລະ ປັບປຸງດັດແກ້ແຜນຜັງລວມຕົວເມືອງນະຄອນຫຼວງວຽງຈັນ (ສະບັບ 3) ທີ່ຕິດພັນກັບການປຸກຕຶກສູງ, ການລະບາຍນ້ຳ ແລະ ລະບົບການຈັດສັນການສັນຈອນໃນຕົວເມືອງນະຄອນຫຼວງວຽງຈັນ.

ພາຍຫຼັງຮັບຟັງການສະເໜີຫົວຂໍ້ຈາກວິທະຍາກອນ, ຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນ ເພື່ອນຳບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ.

ກອງປະຊຸມປິດລົງໃນຕອນບ່າຍຂອງວັນດຽວກັນດ້ວຍຜົນສຳເລັດ ແລະ ບັນລຸຕາມເປົ້າໝາຍທີ່ວາງໄວ້.

**(ສອນສັກ ວັນວິໄຊ)**



# 2 ພາກສ່ວນ ມອບຄອມພິວເຕີໃຫ້ ສພຊ




(ສພຊ) - ຕອນບ່າຍວັນຈັນທີ 6 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບຄອມພິວເຕີຕັ້ງໂຕະ 2 ໜ່ວຍ ແລະ ຄອມພິວເຕີຕັ້ງຕັກ 20 ໜ່ວຍ ລວມມູນຄ່າ 170 ລ້ານກີບ ຈາກສະມາຄົມ FRIENDS OF LAOS ປະຈຳລາວ ແລະ ບໍລິສັດ ມາຣູ ອຸດສາຫະກຳປູກໄມ້ ຈຳກັດຜູ້ດຽວ, ຕາງໜ້າກ່າວມອບໂດຍທ່ານ Yo Woon shik ປະທານຄະນະບໍລິຫານງານສະມາຄົມ FRIENDS OF LAOS ປະຈຳລາວ, ທ່ານ ນາງ Kim jiyoung ປະທານບໍລິສັດ ມາຣູ ອຸດສາຫະກຳປູກໄມ້ ຈຳກັດຜູ້ດຽວ ແລະ ຕາງໜ້າກ່າວຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ທ່ານ ປອ. ອາຄົມ ປຣະເສີດ ໄດ້ກ່າວສະແດງຄວາມຂອບໃຈ ແລະ ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**

# ປະທານ ກສຕສ ເຄື່ອນໄຫວຕິດຕາມກວດກາ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງໄຊຍະບູລີ



(ສພຊ) - ວັນທີ 1-8 ຕຸລານີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ການຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂົງເຂດກະສິກຳ ແລະ ສິ່ງແວດລ້ອມ ເປັນຕົ້ນແມ່ນການຊຸກຍູ້ສົ່ງເສີມກຸ່ມສະຫະກອນການຜະລິດ; ການຈັດແບ່ງເຂດການຜະລິດ, ເຂດປູກ, ເຂດລ້ຽງ; ການຂຶ້ນທະບຽນອອກໃບຕາດິນ ທີ່ຕິດພັນກັບການຈັດຕັ້ງຜັນຂະຫຍາຍມະຕິສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ວ່າດ້ວຍການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້; ວຽກງານການຄຸ້ມຄອງ, ຈັດສັນເນື້ອທີ່ດິນແຕ່ລະປະເພດຂອງບັນດາຂະແໜງການໃນການນຳໃຊ້ດິນໃຫ້ຖືກເປົ້າໝາຍ; ການເຊົ່າ ແລະ ສຳປະທານທີ່ດິນຂອງລັດ.

ການເຄື່ອນໄຫວຄັ້ງນີ້ ໄດ້ສົມທົບກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ຈັດກອງປະຊຸມເຮັດວຽກຮ່ວມກັບພະແນກກະສິກຳ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງເມືອງ, ສະມາຊິກສະຫະກອນແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໂດຍໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂົງເຂດກະສິກຳ ແລະ ສິ່ງແວດລ້ອມ ບົນພື້ນຖານການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ. ຈາກນັ້ນ, ໄດ້ລົງຢ້ຽມຊົມການຈັດສັນເຂດປູກເຂດລ້ຽງ, ໂຄງການພັດທະນາກະສິກຳຕົວແບບ, ລະບົບຫ້ອງານຊົນລະປະທານ, ຢ້ຽມຢາມສະຫະກອນແລະກຸ່ມການຜະລິດ ຢູ່ເມືອງໄຊທານີ ແລະ ເມືອງປາກງື່ມ ນະຄອນຫຼວງວຽງຈັນ; ລົງຕິດຕາມກວດກາບັນດາໂຄງການຂຸດຄົ້ນແຮ່ທາດ, ໂຄງການພັດທະນາກະສິກຳ, ການສຳຫຼວດການຂຶ້ນທະບຽນອອກໃບຕາດິນ ຢູ່ບັນດາເມືອງເປົ້າໝາຍ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງໂຄງການເຂື່ອນໄຟຟ້າປາກລາຍ ເມືອງປາກລາຍ ແຂວງໄຊຍະບູລີ.

ໂອກາດນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນຊີ້ນຳໃຫ້ພາກສ່ວນທີ່ກ່ຽວຂ້ອງສືບຕໍ່ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການຜະລິດ, ການປູກພືດກະສິກຳ, ລ້ຽງສັດ ເພື່ອຮັບປະກັນການຜະລິດສະບຽງອາຫານໃຫ້ພຽງພໍ, ສາມາດຜະລິດເພື່ອສົ່ງອອກເປັນສິນຄ້າ; ສົ່ງເສີມການມີສ່ວນຮ່ວມລະຫວ່າງພາກລັດ, ຜູ້ປະກອບການ ແລະປະຊາຊົນ ໃຫ້ມີການຮ່ວມມື, ຊ່ວຍເຫຼືອ ແລະ ສ້າງຄວາມເຂັ້ມແຂງທາງດ້ານວິຊາການ; ຊຸກຍູ້, ສົ່ງເສີມໃຫ້ເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ ແລະ ສາມາດນຳໃຊ້ແຫຼ່ງທຶນດັ່ງກ່າວເຂົ້າໃນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ຕາມມະຕິ 04/ກມສພ ໃຫ້ມີຜົນສຳເລັດເປັນຢ່າງດີ; ສືບຕໍ່ເອົາໃຈໃສ່ສຳຫຼວດ, ວັດແທກ, ຂຶ້ນທະບຽນອອກໃບຕາດິນ ແລະ ການຈັດສັນທີ່ດິນໃຫ້ບັນລຸຕາມແຜນການທີ່ວາງໄວ້ພ້ອມທັງສືບຕໍ່ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ໂດຍຕິດພັນກັບການຈັດຕັ້ງຜັນຂະຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ ແລະ ກົດໝາຍວ່າດ້ວຍທີ່ດິນ ເຂົ້າສູ່ຊີວິດຕົວຈິງຂອງສັງຄົມ ໃຫ້ທົ່ວເຖິງ ແລະ ມີຜົນສັກສິດ.



# ມອບ-ຮັບເຄື່ອງຊ່ວຍເຫຼືອປະຊາຊົນບ້ານຫ້ວຍເດື່ອ



(ສພຊ) - ວັນສຸກທີ 10 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບວັດຖຸປັດໄຈ ແລະ ເຄື່ອງອຸປະໂພກ ແລະ ບໍລິໂພກ ເພື່ອຊ່ວຍເຫຼືອປະຊາຊົນທີ່ຖືກອຸທົກກະໄພນ້ຳຖ້ວມ ຢູ່ບ້ານຫ້ວຍເດື່ອ ເມືອງໂພນໂຮງ ແຂວງວຽງຈັນ ເຊິ່ງມີຈຳນວນ 262 ຫຼັງຄາເຮືອນ, 287 ຄອບຄົວ, ພົນລະເມືອງທັງໝົດ 1270 ຄົນ ຍິງ 630 ຄົນ; ຕາງໜ້າກ່າວມອບໂດຍປະທານອົງການພຸດທະສາສະໜາສັມພັນລາວ ຂອງ 4 ເມືອງພາຍໃນນະຄອນຫຼວງວຽງຈັນ ຄື: ຈັນທະບູລີ, ໄຊທານີ, ໄຊເສດຖາ ແລະ ສີໂຄດຕະບອງ, ຕາງໜ້າກ່າວຮັບໂດຍທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.



## ກສຕສ...

(ຕໍ່ຈາກໜ້າ 1)

ທ່ານປະທານ-ຮອງປະທານກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ, ລັດຖະມົນຕີ-ຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ, ປະທານແລະຮອງປະທານສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກສຕສ ໃນຂອບເຂດທົ່ວປະເທດແລະແຂກຖືກເຊີນ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ກ່າວວ່າ: ກອງປະຊຸມຄົບຄະນະຂອງກຳມາທິການຄັ້ງນີ້ ຈຸດປະສົງແມ່ນເພື່ອພ້ອມກັນຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ແລະ ຕີລາຄາຄືນ ຕໍ່ການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນທີ່ເກີດຂຶ້ນໃນສັງຄົມ ຕິດພັນກັບວຽກງານໃນຂົງເຂດເສດຖະກິດທີ່ຢູ່ໃນຄວາມຮັບຜິດຊອບຂອງກຳມາທິການ; ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂອງຂະແໜງການທີ່ກ່ຽວຂ້ອງແລະວາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ ໃຫ້ມີຄວາມເປັນເອກະພາບກັນ, ຮັບປະກັນການປະຕິບັດວຽກງານເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກໍຄືວຽກງານຂອງສະພາແຫ່ງຊາດ ມີປະສິດທິພາບ ແລະ ມີປະສິດທິຜົນດີຂຶ້ນ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2025 ແລະແຜນການເຄື່ອນໄຫວວຽກງານປີ 2026, ການເຄື່ອນໄຫວວຽກງານປະຈຳ 5 ປີ (2021-2025) ແລະ ທິດທາງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ; ຜົນການປະເມີນຄືນໂຄງການຂຸດຄົ້ນແຮ່ທາດ ແລະ ການຫັນໂຄງການທົດລອງ ມາເປັນໂຄງການປົກກະຕິ ຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 133/ສພຊ, ລົງວັນທີ 01 ກໍລະກົດ 2024 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນດ້ານແຮ່ທາດໃນໄລຍະຜ່ານມາ ແລະ ແຜນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ; ການຈັດຕັ້ງປະຕິບັດວຽກງານການເຊົ່າ ແລະ ສຳປະທານທີ່ດິນຂອງບັນດາໂຄງການລົງທຶນໃນຂອບເຂດທົ່ວປະເທດທີ່ໄດ້ຮັບການອະນຸມັດຜ່ານມາ ແລະທິດທາງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ; ການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ລວມທັງການຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ວ່າດ້ວຍການພິຈາລະນາຮັບຮອງການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້.

ບັນດາຜູ້ແທນໄດ້ສຸມສະຕິປັນຍາ, ຄວາມຮູ້ຄວາມສາມາດເຂົ້າໃນການຄົ້ນຄວ້າ, ສົນທະນາປຶກສາຫາລື, ປະກອບຄວາມເຫັນຢ່າງກົງໄປກົງມາ ໂດຍທຽບໃສ່ພຶດຕິກຳຕົວຈິງໃນສະພາບປັດຈຸບັນທີ່ເກີດຂຶ້ນຢູ່ທ້ອງຖິ່ນ ແລະ ຂະແໜງການຂອງຕົນ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມມີຄວາມຄົບຖ້ວນ, ສົມບູນ ໂດຍສະເພາະບັນດາວຽກສຳຄັນພົ້ນເດັ່ນທີ່ເປັນການສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງສົກປີ ແລະ ເປັນທິດທາງແຜນການໃຫ້ພາກສ່ວນກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມຄືບໜ້າ ແລະ ປະສິດທິຜົນຂຶ້ນຕື່ມ.

ທ່ານສົມມາດ ພົລເສນາ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ກຳມາທິການຍາດມາໄດ້ໃນ 1 ປີ ກໍຄືຕະຫຼອດໄລຍະ 5 ປີຜ່ານມາ ທັງເນັ້ນໜັກໃຫ້ເອົາໃຈໃສ່ໃນການສ້າງແລະປັບປຸງກົດໝາຍ, ການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ, ການຕິດຕາມກວດກາ, ການສ້າງຄວາມເຂັ້ມແຂງ ລວມທັງການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ໃນການຄົ້ນຄວ້າ ແລະ ເຂົ້າຮ່ວມແຕ່ຫົວທີ ເພື່ອຄວາມເປັນເອກະພາບທາງດ້ານເນື້ອໃນ, ຂໍ້ມູນ ແລະ ບັນດາມາດຕະການຕ່າງໆ ໃນການຈັດຕັ້ງປະຕິບັດກົດໝາຍ, ມະຕິ ແລະ ຄຳສັ່ງຕ່າງໆ ຕາມຂົງເຂດຄວາມຮັບຜິດຊອບ ໃຫ້ມີຄວາມຖືກຕ້ອງ, ທັນການ ແລະ ສອດຄ່ອງຕາມກົດໝາຍ.

**(ສອນສັກ ວັນວິໄຊ)**





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ເວລາຂອງກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະກຳມະການເລືອກຕັ້ງລະດັບຊາດ; ບົດລາຍງານເພີ່ມກ່ຽວກັບການຄົ້ນຄວ້າໜັງສືສະເໜີຂອງລັດຖະບານສະບັບເລກທີ 57/ລບ, ລົງວັນທີ 7 ພຶດສະພາ2025ກ່ຽວການພິຈາລະນາຮັບຮອງເອົາວຽກງານຊາຍແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງກັບແຂວງ, ແຂວງກັບແຂວງໃນຂອບເຂດທົ່ວປະເທດ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານສະບັບເລກທີ 89/ລບ, ລົງວັນທີ 9 ກໍລະກົດ2025ສະເໜີຂໍດັດແກ້ມູນຄ່າໂຄງການທະລຸ ແລະ ຍົກລະດັບເສັ້ນທາງ ແຕ່ບ້ານວຽງໄຊ-ຫຼັກໝາຍ 009-ບ້ານລະມ່ອງ ເມືອງພູວົງ ແຂວງອັດຕະປື ເປັນເສັ້ນທາງຍຸດທະສາດປ້ອງກັນຊາດ ເຊິ່ງກະຊວງປ້ອງກັນປະເທດເປັນຜູ້ຈັດຕັ້ງປະຕິບັດແລະເປັນໂຄງການບຸລິມະສິດຂອງລັດຖະບານທີ່ຮີບດ່ວນ ເພື່ອແກ້ໄຂບັນຫາຄວາມບໍ່ສະຫງົບລະຫວ່າງຊາຍແດນລາວ-ກຳປູເຈຍ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານສະບັບເລກທີ 108/ລບ, ລົງວັນທີ 1 ກັນຍາ 2025 ສະເໜີຂໍດັດແກ້ມູນຄ່າສັນຍາໂຄງການກໍ່ສ້າງທາງປູຢາງສອງຊັ້ນ ແຕ່ 3 ແຍກບ້ານໃໝ່ເມືອງຫຼວງນ້ຳທາ-ເມືອງນາແລແຂວງຫຼວງນ້ຳທາ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ສະບັບເລກທີ 107/ລບ, ລົງວັນທີ 1 ກັນຍາ 2025ຂໍສະເໜີດັດແກ້ຫົວໜ່ວຍລາຄາ ແລະ ມູນຄ່າສັນຍາໂຄງການກໍ່ສ້າງທາງປູຢາງສອງຊັ້ນ ແຕ່ບ້ານທ່ານາສາ (ລຽບຕາມສາຍນ້ຳສັງ) ຫາບ້ານວັງມ້າເມືອງສັງທອງ ເຊື່ອມຕໍ່ທາງບ້ານເຕົາໄຫ ອອກສູ່ບ້ານຫ້ວຍອີເລີດ ເມືອງຫີນເຫີບ ແຂວງວຽງຈັນ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານສະບັບເລກທີ 94/ລບ, ລົງວັນທີ 16 ກໍລະກົດ 2025 ທີ່ຂໍສະເໜີຫັນປ່ຽນທີ່ດິນປ່າໄມ້ ເປັນດິນປະເພດອື່ນລັກສະນະຖາວອນ ທີ່ນອນໃນປ່າປ້ອງກັນແຫ່ງຊາດແຫຼ່ງນ້ຳກົງ-ເຊຊຸ ແລະ ປ່າຜະລິດນ້ຳກົງ ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງແລວສາຍໄຟຟ້າແຮງສູງ 115 KV ຈາກສະຖານີເຂື່ອນໄຟຟ້າເຊກອງຕອນລຸ່ມ ເອ ຢູ່ເມືອງສະໜາມໄຊ ຫາສະຖານີໃໝ່ 500 KV ຢູ່ເມືອງພູວົງ ແຂວງອັດຕະປື; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ສະບັບເລກທີ 84/ລບ, ລົງວັນທີ 25 ກໍລະກົດ 2025 ການຂໍສະເໜີຫັນປ່ຽນປະເພດທີ່ດິນທີ່ມີປ່າໄມ້ ເປັນທີ່ດິນປະເພດອື່ນລັກສະນະຊົ່ວຄາວ ທີ່ນອນໃນປ່າຜະລິດພູສາມຫຼ່ຽມ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກ ແຮ່ຊືນ, ແຮ່ສັງກະສີ ແລະ ແຮ່ເຫຼັກ ຢູ່ເຂດບ້ານໂພນໂຮມ ເມືອງທ່າໂທມ ແຂວງໄຊສົມບູນ; ລາຍງານຄວາມຕ້ອງການງົບປະມານເພີ່ມຂອງບັນດາອົງການລັດແລະຜູ້ປະກອບການ ສຳລັບປີ 2025; ລາຍງານຜົນສຳເລັດການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 46 ທີ່ນະຄອນຫຼວງກົວລາລຳເປີ ປະເທດມາເລເຊຍ; ລາຍງານຄວາມຄືບໜ້າໃນການສ້າງປຶ້ມ "50 ປີແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ກັບສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ, ການຮ່ວມມືຮອບດ້ານແລະການພັດທະນາ"; ລາຍງານຜົນການເຝິກອົບຮົມເພື່ອຄວາມຮັບຮູ້ ແລະ ເຂົ້າໃຈ ພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ລາຍງານກ່ຽວກັບການແຕ່ງຕັ້ງບຸກຄະລາກອນຂອງສານປະຊາຊົນ.

ບັນດາຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ຕໍ່ບັນດາບົດລາຍງານທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ເພື່ອຮັບປະກັນການຕົກລົງບັນຫາຢ່າງມີຄວາມເປັນເອກະພາບ, ສາມາດເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ນຳຜົນປະໂຫຍດລວມມາສູ່ປະເທດຊາດແລະປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

**(ນາງ ອາລິນ ສຸພົມມະປະດິດ)**

## ທາບທາມ...

(ຕໍ່ຈາກໜ້າ 1)

ສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ແລະ ມີການເຂົ້າຮ່ວມຂອງບັນດາສະຫາຍຄະນະປະຈຳພັກ, ຄະນະບໍລິຫານງານພັກ, ເລຂາ ແລະ ຮອງເລຂາຄະນະພັກຮາກຖານ ແລະໜ່ວຍພັກຮາກຖານທີ່ຂຶ້ນກັບຄະນະພັກສະພາແຫ່ງຊາດ, ບັນດາສະມາຊິກພັກຂັ້ນຮອງຫົວໜ້າພະແນກຂຶ້ນໄປ ຈຳນວນ 200 ກວ່າສະຫາຍ.

ໃນກອງປະຊຸມ, ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຄະນະປະຈຳພັກສະພາແຫ່ງຊາດ ໄດ້ຜ່ານແຈ້ງການຂອງອະນຸກຳມະການກົດລະບຽບ ແລະ ບຸກຄະລາກອນກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ສະບັບເລກທີ 82/ອກ.ບຄ, ລົງວັນທີ 04 ມິຖຸນາ 2025; ມະຕິຕົກລົງຂອງກົມການເມືອງສູນກາງພັກ ວ່າດ້ວຍມາດຕະຖານ, ເງື່ອນໄຂຂອງຜູ້ແທນສົມບູນ ແລະ ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ສະບັບເລກທີ 05/ກມສພ, ລົງວັນທີ 12 ພຶດສະພາ 2025 ແລະ ຂໍ້ຕົກລົງຄະນະພັກສະພາແຫ່ງຊາດວ່າດ້ວຍການອະນຸມັດລາຍຊື່ຜູ້ລົງສະໝັກເລືອກຕັ້ງເປັນຜູ້ແທນສົມບູນ, ສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ.

ໃນກອງປະຊຸມ, ກ່ອນຈະດຳເນີນການເລືອກເອົາບັນດາສະຫາຍຜູ້ແທນກອງປະຊຸມໃຫຍ່ຄັ້ງທີXIIຂອງພັກນັ້ນ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນເນັ້ນໜັກວ່າ: ຜູ້ແທນສົມບູນແລະສຳຮອງຂອງອົງຄະນະພັກສະພາແຫ່ງຊາດທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ເປັນຜູ້ຕາງໜ້າຂອງອົງຄະນະພັກສະພາແຫ່ງຊາດ ເພື່ອຄົ້ນຄວ້າ, ປະກອບຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາບັນດາເອກະສານສຳຄັນ ແລະ ວຽກງານອື່ນໆຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII, ໄດ້ຮຽກຮ້ອງໃຫ້ບັນດາຜູ້ແທນກອງປະຊຸມຄັ້ງນີ້ ຈົ່ງໄດ້ອີງໃສ່ບັນດາມາດຕະຖານ, ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມະຕິຂອງກົມການເມືອງສູນກາງພັກ ເປັນຕົ້ນຕ້ອງແມ່ນຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮັບຜິດຊອບການເມືອງສູງ, ເປັນຜູ້ດີເດັ່ນ, ເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບຜິດຊອບ; ຕ້ອງແມ່ນຜູ້ທີ່ມີຄວາມຮູ້ທາງດ້ານທິດສະດີ, ວິທະຍາສາດໃດໜຶ່ງທີ່ແນ່ນອນ ແລະ ມີຄວາມສາມາດໃນການຄົ້ນຄວ້າປະກອບຄຳເຫັນ ແລະ ຕົກລົງຕໍ່ບັນຫາຕ່າງໆໃນກອງປະຊຸມໃຫຍ່ ແລະ ຕ້ອງມີສຸຂະພາບແຂງແຮງດີ, ສາມາດເຂົ້າຮ່ວມກອງປະຊຸມໃຫຍ່ຈົນສຳເລັດ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ດຳເນີນການປ່ອນບັດເລືອກເອົາຜູ້ແທນສົມບູນ ແລະ ສຳຮອງ ເຊິ່ງມີຜູ້ລົງສະໝັກ 14 ສະຫາຍ ຍິງ 1 ສະຫາຍ, ເລືອກໄດ້ຜູ້ແທນສົມບູນ 8 ສະຫາຍ, ສຳຮອງ 2 ສະຫາຍ ຍິງ 1 ສະຫາຍ.

**(ນາງ ອາລິນ ສຸພົມມະປະດິດ)**



## ລາຍງານ...

(ຕໍ່ຈາກໜ້າ 1)

ຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນແລະການກວດສອບ; ເຂົ້າຮ່ວມມີປະທານກຳມາທິການບັນດາເຜົ່າ, ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ພ້ອມດ້ວຍຊ່ຽວຊານຈາກອົງການຈັດຕັ້ງສາກົນ, ພາກສ່ວນທີ່ກ່ຽວຂ້ອງແລະວິຊາການຂອງ ກຜງສ.

ທ່ານ ປອ. ລີເບີ ລີບົວປາວ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງກອງປະຊຸມວ່າ ເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ເວົ້າສະເພາະໃນການປະເມີນຜົນທ້າຍສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ; ກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອຕິດຕາມກວດກາ, ສະຫຼຸບຕີລາຄາຜົນສຳເລັດ ແລະ ບັນຫາຄົງຄ້າງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ເພີ່ມທະວີຄວາມຮູ້ຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ເປັນການກະກຽມຄວາມພ້ອມດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX.

ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ການນຳສະເໜີຈາກບັນດາຊ່ຽວຊານຈາກພາກສ່ວນຕ່າງໆ ກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະທິດທາງໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X; ພ້ອມກັນນັ້ນ, ຍັງໄດ້ຮັບຟັງການລາຍງານກ່ຽວກັບຍຸດທະສາດການເງິນຕ່າງໆ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ X ເຊັ່ນ: ການລະດົມທຶນພາຍໃນ, ການຄຸ້ມຄອງໜີ້ສາທາລະນະ, ປະສິດທິຜົນຂອງງົບປະມານລັດ ແລະ ການສົ່ງເສີມການລົງທຶນຈາກພາກເອກະຊົນ. ບັນດາຊ່ຽວຊານ ແລະ ຜູ້ເຂົ້າຮ່ວມ ໄດ້ແລກປ່ຽນບົດຮຽນຢ່າງກົງໄປກົງມາ ເພື່ອຍາດແຍ່ງເອົາຄວາມຮູ້ ແລະ ປະສົບການຈາກພາຍໃນແລະຕ່າງປະເທດ; ການປະກອບຄຳຄິດຄຳເຫັນດັ່ງກ່າວແມ່ນເພື່ອເຮັດໃຫ້ການກະກຽມເນື້ອໃນການວາງທິດທາງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ມີຄວາມຄືບຖ້ວນ, ຮັດກຸມ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ເກີດຜົນເປັນຈິງ.

ຜ່ານກອງປະຊຸມສຳມະນາໃນຄັ້ງນີ້, ຄາດວ່າຜູ້ເຂົ້າຮ່ວມຈະໄດ້ຮັບຄວາມຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບແນວທາງນະໂຍບາຍຂອງພັກ, ບົດຮຽນຈາກສາກົນເພື່ອນຳໄປໝູນໃຊ້ເຂົ້າໃນການເປັນເສນາທິການຮັບໃຊ້ວຽກງານຂອງສະພາແຫ່ງຊາດ ໃຫ້ມີຄຸນນະພາບ ແລະ ປະສິດທິຜົນສູງຂຶ້ນ, ປະກອບສ່ວນອັນສຳຄັນເຂົ້າໃນການຕົກລົງບັນຫາພື້ນຖານຂອງປະເທດຊາດໃນຕໍ່ໜ້າ.

# ສສຊ ແລະ ສສຂ ບໍລິຄຳໄຊ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9




(ສພຂ)-ເພື່ອເປັນການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ IV; ວັນທີ 8-15 ກັນຍາຜ່ານມາ, ນຳໂດຍຂອງທ່ານ ປອ. ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງປາກກະດິງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ສພຊ ຊຸດທີ IX ແລະ ສພຂ ຊຸດທີ IV ຢູ່ຫ້ອງວ່າການເມືອງປາກກະດິງ, ບ້ານໂພນຈະເລີນ, ບ້ານດອນໄຊ, ບ້ານຫາດຊາຍຄຳ ແລະ ບ້ານປາກຊຸນ; ເມືອງຄຳເກີດນຳໂດຍທ່ານ ນາງ ຂັນທອງ ພັນທະຈັກ, ກຳມະການພັກແຂວງ, ປະທານກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ, ສສຊ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງຄຳເກີດ ໄດ້ເຄື່ອນໄຫວເຜີຍແຜ່ຢູ່ບ້ານສົມສະໜຸກ ແລະ ບ້ານໂພນແພງ; ເມືອງບໍລິຄັນນຳໂດຍທ່ານພົອ. ຄຳສາຍ ພັນດານຸວົງ ປະທານສະຫະພັນນັກຮົບເກົ່າແຂວງ ພ້ອມດ້ວຍສສຂປະຈຳເຂດເລືອກຕັ້ງເມືອງບໍລິຄັນ ໄດ້ເຄື່ອນໄຫວເຜີຍແຜ່ຢູ່ບ້ານຊຽງລື, ຫວາ, ກົກໂພ, ໜອງແດງ, ສີຫວາດ, ໂພນຂາມ, ຊຶມຊື່ນ ແລະ ຫ້ວຍຄູນ; ເມືອງວຽງທອງ ນຳໂດຍ ທ່ານ ເລື່ອນ ວິໄລ ຈັນທະລາພັນ ຮອງເລຂາພັກແຂວງ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງວຽງທອງ ໄດ້ເຄື່ອນໄຫວເຜີຍແຜ່ຢູ່ບ້ານຂ້ອນຕ່າວ; ເມືອງໄຊຈຳພອນ ນຳໂດຍທ່ານ ນາງ ຟອງສະໝຸດ ພົງວິຈິດກຳມະການພັກແຂວງ, ເລຂາທິການສະພາປະຊາຊົນແຂວງ, ສສຂ ປະຈຳເຂດເລືອກຕັ້ງເມືອງໄຊຈຳພອນ ແລະທ່ານ ອຸດົມ ວົງໄກສອນ ກຳມະການພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ຫົວໜ້າພະແນກພົວພັນຕ່າງປະເທດ ພ້ອມດ້ວຍສສຂປະຈຳເຂດເລືອກຕັ້ງ ໄດ້ເຄື່ອນໄຫວເຜີຍແຜ່ຢູ່ສຳນັກເມືອງໄຊຈຳພອນ ແລະ ບ້ານວັງບານ; ເຂົ້າຮ່ວມມີບັນດາທ່ານຄະນະບໍລິຫານງານພັກເມືອງ, ຫົວໜ້າຫ້ອງການ ປກຊ-ປກສ, ຫົວໜ້າ,ຮອງຫົວໜ້າ ອົງການທຽບເທົ່າຂອງເມືອງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ,ພະນັກງານຫຼັກແຫຼ່ງພາຍໃນເມືອງ ແລະ ປະຊາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານທີ່ພົ້ນເດັ່ນ ຂອງເມືອງ ແລະ ບ້ານ ໃນໄລຍະຜ່ານມາ ໂດຍລວມເຫັນໄດ້ວ່າມີຜົນສຳເລັດໃນຫຼາຍດ້ານ; ຈາກນັ້ນ, ສສຊ-ສສຂ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ (ສພຊ) ຊຸດທີ IX ແລະ(ສພຂ) ຊຸດທີ IV ໂດຍໄດ້ຍົກໃຫ້ເຫັນບັນຫາສຳຄັນຕ່າງໆ ທີ່ໄດ້ຄົ້ນຄວ້າ, ພິຈາລະນາ, ເນື້ອໃນການປັບປຸງ ບາງມາດຕາຂອງລັດຖະທຳມະນູນ, ກົດໝາຍ, ວັນສ້າງຕັ້ງສະພາປະຊາຊົນແຂວງ,ການປັບປຸງກົງຈັກການປົກຄອງແຕ່ລະຂັ້ນ ໃຫ້ຜູ້ເຂົ້າຮ່ວມ ໄດ້ຮັບຮູ້ ແລະເຂົ້າໃຈຢ່າງກວ້າງຂວາງ ແລະເລິກເຊິ່ງ.

**(ຂ່າວ-ພາບ: ລະອອງດາວ)**




# ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ



(ສພຂ)-ວັນທີ 24-25 ກັນຍາຜ່ານມາ; ທ່ານ ໃສຄຳ ທອງລັດ ຄະນະປະຈຳສະພາປະຊາຊົນ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍແລະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຢູ່ເມືອງບໍລິຄັນ ແລະ ເມືອງປາກກະດິງ; ເຂົ້າຮ່ວມມີຄະນະປະຈຳພັກເມືອງ, ຮັກສາການເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ, ຮອງຫົວໜ້າ ຫ້ອງການ ແລະ ວິຊາການກ່ຽວຂອງສະພາປະຊາຊົນແຂວງ ແລະ ຫ້ອງການກ່ຽວຂ້ອງຂອງເມືອງ.

ຈຸດປະສົງ ເພື່ອຮັບຟັງການລາຍງານ ແລະ ເກັບກຳຂໍ້ມູນກ່ຽວກັບ ຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ, ການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງບັນດາຫ້ອງການໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ເຊິ່ງສາມາດຮັບຮູ້ໄດ້ເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ; ຈາກນັ້ນ, ທາງຄະນະຍັງໄດ້ລົງຢ້ຽມຢາມ ແລະ ເຮັດວຽກຮ່ວມກັບໂຮງຮຽນ ມສ ບໍລິຄັນ ຕື່ມອີກ.

ພ້ອມນັ້ນ, 24-26 ກັນຍາຜ່ານມາ, ທ່ານ ນາງ ຂັນທອງ ພັນທະຈັກກຳມະການພັກແຂວງ, ປະທານຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມຊຸກຍູ້ ຢູ່ເມືອງປາກຊັນ, ເມືອງທ່າພະບາດ, ຢ້ຽມຢາມໂຮງຮຽນມັດທະຍົມບູນໜອງບົວ ແລະ ມັດທະຍົມສົມບູນທ່າພະບາດ.

**(ສີສຸກ ວົງພະຈັນ ແລະ ບຸນນຳ ແພງສີແກ້ວ)**



# ສະພາປະຊາຊົນແຂວງບໍລິຄຳໄຊ ມອບ-ຮັບເຄື່ອງຊ່ວຍເຫຼືອ




(ສພຂ) -ວັນທີ 4 ກັນຍາຜ່ານມາ, ສະຫະພັນນັກຮົບເກົ່າແຂວງບໍລິຄຳໄຊ ໄດ້ມອບປຶ້ມຂຽນ ຈຳນວນ360ຫົວມູນຄ່າ2.880.000ກີບ ໃຫ້ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຕາງໜ້າກ່າວມອບໂດຍທ່ານພົອ. ວົງພະຈັນ ແກ້ວບຸນເຮືອງ ຮອງປະທານ, ປະທານກວດກາສະຫະພັນນັກຮົບເກົ່າແຂວງ; ຕາງໜ້າຮັບຂອງທ່ານນາງຟອງສະໝຸດພົງວິຈິດກຳມະການພັກແຂວງ ເລຂາທິການ ສພຂ.

ວັນຕໍ່ມາ, ທີ 5 ກັນຍາຜ່ານມາ, ບໍລິສັດ BM ການຄ້າຂາອອກ-ຂາເຂົ້າ ໄດ້ມອບອຸປະກອນການສຶກສາ ແລະ ກິລາ ເຊິ່ງປະກອບມີ: ປຶ້ມຂຽນ, ບິກ, ບານຕີ, ບານເຕະ, ກະຕໍ້ຫວາຍ ແລະ ເຂົ້າໜົມ ມູນຄ່າ: 8 ລ້ານກີບ ໃຫ້ ສພຂ ຕາງໜ້າມອບໂດຍ ທ່ານ ຄອນສະຫວັນ ສອນຄຳໄຊ ປະທານ ບໍລິສັດ BM ການຄ້າ ຂາອອກ-ຂາເຂົ້າ ຕາງໜ້າຮັບໂດຍທ່ານນາງຂັນທອງພັນທະຈັກກຳມະການພັກແຂວງປະທານຄະນະກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ.

ພ້ອມນັ້ນ, ວັນທີ 8 ກັນຍາຜ່ານມາ, ກຸ່ມບໍລິສັດອີພີແອວຈຳກັດຜູ້ດຽວ ໄດມອບອຸປະກອນກິລາ ເຊິ່ງປະກອບມີ: ບານຕີ, ບານເຕະ, ກະຕໍ້ຫວາຍ, ເຊືອກດຶງ ມູນຄ່າ: 11.472.000 ກີບ ໃຫ້ ສພຂ ຕາງໜ້າມອບໂດຍທ່ານ ວັນນີ ພົມວິໄລ; ຕາງໜ້າຮັບໂດຍທ່ານ ນາງ ຟອງສະໝຸດພົງວິຈິດ.

ທັ້ງນີ້, ເພື່ອນຳໄປມອບຕໍ່ໃຫ້ນ້ອງນ້ອຍນັກຮຽນທີ່ທຸກຍາກຢູ່ບັນດາໂຮງຮຽນພາຍໃນທົ່ວແຂວງ

**(ຂ່າວ-ພາບ: ລະອອງດາວ)**



# ວິເຄາະ, ວິໄຈບັນຫາ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ




(ສພຂ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບການວິເຄາະ, ວິໄຈບັນຫາແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ(ສສຂ)ແລະເສນາທິການຊ່ວຍວຽກ ຂອງສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ດຳເນີນຂຶ້ນລະຫວ່າງວັນທີ 15-16 ກັນຍາຜ່ານມາທີ່ເມືອງບົວລະພາແຂວງຄຳມ່ວນ, ໂດຍການເປັນປະທານຂອງ ທ່ານບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມມີບັນດາທ່ານຮອງປະທານສະພາປະຊາຊົນຂັ້ນແຂວງ, ທ່ານ ພົອ. ຄຳສິງ ນິນທະສອນ ເລຂາພັກເມືອງບົວລະພາ; ມີບັນດາຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ເລຂາພັກເມືອງ 9 ເມືອງ, ສສຂ ປະຈຳເຂດເລືອກຕັ້ງ 10 ຕົວເມືອງ, ຕາງໜ້າຈາກອົງການຈັດຕັ້ງສາກົນ, ແຂກຖືກເຊີນ ແລະ ພະນັກງານເສນາທິການຊ່ວຍວຽກເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການການຮັບຄຳຮ້ອງຂໍຄວາມເປັນທຳ, ການຕ້ອນຮັບ ແລະ ໃຫ້ຄຳປຶກສາຂອງກຳມາທິການຍຸຕິທຳ; ການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ ແລະ ການຕິດຕາມກວດກາ ແລະ ຊຸກຍູ້ການພິຈາລະນາ ແລະ ແກ້ໄຂການຕົກລົງກ່ຽວກັບການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ; ຈາກນັ້ນ, ໄດ້ມີການປະກອບຄວາມຄິດເຫັນ ແລະ ຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດວຽກງານການຮັບ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແລະ ໄດ້ຈັດແບ່ງກຸ່ມຄົ້ນຄວ້າ, ວິເຄາະ, ວິໄຈບັນຫາຄຳຮ້ອງຂໍຄວາມເປັນທຳພ້ອມລາຍງານຜົນຄົ້ນຄວ້າຕໍ່ກອງປະຊຸມເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃຫ້ມີເນື້ອໃນຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ, ພ້ອມກັນຍົກສູງຄວາມຮັບຜິດຊອບການຕັ້ງຄຳຖາມສົນທະນາແລກປ່ຽນໃນແຕ່ລະຫົວຂໍ້.

ທ່ານບຸນມີພິມມະສອນ ກ່າວວ່າ: ກອງປະຊຸມຄັ້ງນີ້, ເພື່ອນຳເອົາບົດຮຽນໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ແລະ ເພື່ອໃຫ້ວຽກງານດັ່ງກ່າວມີປະສິດທິພາບ ທັງຮັບປະກັນໃນການປົກປ້ອງສິດຜົນປະໂຫຍດ ອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ໃຫ້ໄດ້ຮັບຄວາມຍຸຕິທຳຖືກຕ້ອງຕາມລະບຽບຂອງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍມີຄວາມເຂັ້ມງວດຂຶ້ນເທື່ອລະກ້າວແລະສ້າງຄວາມເຂົ້າໃຈ ແລະ ຍົກສູງຂີດຄວາມສາມາດຕໍ່ວຽກງານການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ພ້ອມທັງເສີມຂະຫຍາຍທັກສະ, ຄວາມຮູ້ ກ່ຽວກັບວິທີການສ້າງແຜນການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ການຕິດຕາມກວດກາການແກ້ໄຂຄຳຮ້ອງທຸກ, ການລາຍງານຜົນການຕິດຕາມກວດກາໃຫ້ເຂົ້າໃຈແບບເລິກເຊິ່ງ ແລະ ກວ້າງຂວາງ.

**(ເອື້ອ ມະໂນສິງ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ຂົງເຂດເສດຖະກິດ, ແຜນການ ແລະ ການເງິນ

(ສພຂ)-ວັນທີ 10-12 ກັນຍາ ແລະ ວັນທີ 26-29 ກັນຍາຜ່ານ ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດພ້ອມດ້ວຍ ທ່ານ ນາງ ທົງຄຳ ໄຊຍະຄົມ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ຂອງສະພາປະຊາຊົນແຂວງ (ສພຂ) ; ທ່ານຂັນທອງ ຄົມທິລາດ ຮອງເລຂາທິການສະພາປະຊາຊົນແຂວງ; ທ່ານ ພົມມາ ຈັນທະວົງ ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ຄະນະໄດ້ເຄື່ອນໄຫວເຜີຍແຜ່ແລະຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດເສດຖະກິດ ແຜນການ ແລະ ການເງິນ ຂອງ ສພຂ ຢູ່ 8 ເມືອງຄື: ເມືອງພະລານໄຊ, ເມືອງພິນ, ເມືອງວິລະບູລີ, ເມືອງເຊໂປນ, ເມືອງນອງ, ເມືອງສອງຄອນ, ເມືອງໄຊພູທອງ ແລະ ເມືອງໄຊບູລີ; ໂດຍການຕ້ອນຮັບຂອງເລຂາ-ຮອງເລຂາພັກເມືອງ, ຄະນະນຳຂອງເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ບັນດາຫົວໜ້າຫ້ອງການອ້ອມຂ້າງເມືອງ, ເລຂາພັກບ້ານ, ນັກທຸລະກິດຜູ້ປະກອບການຂອງແຕ່ລະເມືອງເຂົ້າຮ່ວມຮັບຟັງ.



ກົດໝາຍ ທີ່ນຳມາເຜີຍແຜ່ປະກອບມີ: ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ); ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ); ກົດໝາຍ ວ່າດ້ວຍວິສາຫະກິດ; ຂໍ້ຕົກລົງຂອງ ທ່ານເຈົ້າແຂວງ ວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ສະບັບປັບປຸງ); ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການຂຸດຄົ້ນດິນດຳ-ດິນແດງ ພາຍໃນແຂວງສະຫວັນນະເຂດ; ຄຳສັ່ງ ເລກທີ 06/ນຍ, ລົງວັນທີ 7 ມີນາ 2025 ວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາ ແຮ່ຄຳຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນດາສາຍນໍ້າ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດທົ່ວປະເທດ ໂດຍການນຳສະເໜີ ແລະ ເຜີຍແຜ່ຈາກບັນດາທ່ານນັກວິທະຍາກອນຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ; ຈາກນັ້ນ, ໄດ້ພ້ອມກັນຄຳຄິດຄຳເຫັນ, ຖາມ-ຕອບ ຂໍ້ຂັດຂ້ອງໃຈ ກ່ຽວກັບເນື້ອໃນນິຕິກຳທີ່ບໍ່ທັນຈະແຈ້ງ ແລະ ສອດຄ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງໃນໄລຍະຜ່ານມາ ເພື່ອຈະນຳເອົາຄຳສະເໜີຕ່າງໆນຳໄປສັງລວມ ແລະສົ່ງໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ.

ທ່ານ ກອງແກ້ວ ວໍລະວົງ ຍັງໄດ້ຮຽກຮ້ອງໃຫ້ແຕ່ລະພາກສ່ວນຈົ່ງພ້ອມກັນ ສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນຂອງກອງປະຊຸມໃຫ້ກວ້າງຂວາງ, ເລິກເຊິ່ງຂຶ້ນ ດ້ວຍການສືບຕໍ່ລົງໂຄສະນາເຜີຍແຜ່ບັນດາເນື້ອໃນຈິດໃຈ ຂອງກົດໝາຍ ເຂົ້າສູ່ລົງເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ໃຫ້ຖືກຕ້ອງສອດຄ່ອງ ຕາມຂອບເຂດສິດ, ພາລະບົດບາດໜ້າທີ່ວຽກງານຂອງຕົນອີກດ້ວຍ.

ພ້ອມນັ້ນ, 19 ກັນຍາຜ່ານມາ, ທ່ານ ທອງໃສ ອິນທິແສງ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ທ່ານ ວິລະສິດ ສີວົງດາວ ຮອງປະທານຄະນະກຳມະການເສດຖະກິດແຜນການແລະການເງິນ, ທ່ານ ສີໂຫ ທໍລະທາ ກຳມະການພັກແຂວງ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ພ້ອມຄະນະ ໄດ້ເຄື່ອນໄຫວເຜີຍແຜ່ກົດໝາຍໃນຂົງເຂດເສດຖະກິດ ແຜນການ ແລະ ການເງິນ ຢູ່ເມືອງໄຊບູລີ ຕື່ມອີກ.

**(ນາງ ຄອນສະຫວັນ ເມກສະຫວັນ)**



# ຕິດຕາມກວດກາ, ເກັບກຳຂໍ້ມູນ ວຽກງານຍຸຕິທຳ ແລະ ປກຊ-ປກສ



(ສພຂ)-ວັນທີ 16-17 ກັນຍາຜ່ານມາ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ນຳໂດຍທ່ານ ສະແຫວງ ນັນທະວົງ ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ); ທ່ານ ພູທອນ ພຸດທະຂັນຕີ ເລຂາທິການສະພາປະຊາຊົນແຂວງ; ທ່ານ ພັທ. ແສງກາ ສຸວັນນະຄົງ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ພ້ອມຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ເກັບກຳຂໍ້ມູນແລະສັງລວມການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ບັນດາມະຕິກອງປະຊຸມສະພາແຫ່ງຊາດ (ສພຊ), ບັນຫາສະພາບການທີ່ພົ້ນເດັ່ນໃນຂົງເຂດວຽກງານຍຸຕິທຳແລະວຽກງານ ປກຊ-ປກສ ຢູ່ເມືອງເຊໂປນ, ເມືອງພິນ ແລະ ເມືອງອາດສະພັງທອງ; ໃຫ້ການຕ້ອນຮັບແລະເຮັດວຽກຮ່ວມໂດຍບັນດາທ່ານເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ, ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງຂອງແຕ່ລະເມືອງ, ອົງການສືບສວນ-ສອບສວນຂອງເມືອງ, ອົງການໄອຍະການປະຊາຊົນເຂດ, ສານປະຊາຊົນເຂດ, ຫ້ອງການຕັດສິນຂອງສານປະຈຳເມືອງ ແລະ ຫ້ອງການຍຸຕິທຳເມືອງ.

ຈຸດປະສົງເພື່ອຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ມະຕິຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ສະບັບເລກທີ 141/ສພຊ ແລະ ສະບັບເລກທີ 142/ສພຊ, ລົງວັນທີ 11 ທັນວາ 2024 ໃນຂົງເຂດວຽກງານຍຸຕິທຳຕິດພັນກັບການການຈັດຕັ້ງປະຕິບັດວາລະແຫ່ງຊາດ ທັງເປັນການໃກ້ຊິດຕິດແທດ ແລະ ເກັບກຳຂໍ້ມູນຕົວຈິງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຂອງພະນັກງານຜູ້ຮັບຜິດຊອບແກ້ໄຂຄຳຮ້ອງທຸກຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນເຂດ, ສານປະຊາຊົນເຂດ, ຫ້ອງປະຕິບັດຄຳຕັດສິນຂອງສານປະຈຳເມືອງ ແລະ ຫ້ອງການຍຸຕິທຳເມືອງ ແລະ ເປັນບ່ອນອີງໃນການສະຫຼຸບຕີລາຄາ, ການກະກຽມເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX.

ໃນການລົງເຄື່ອນໄຫວ ໄດ້ຮັບຟັງການລາຍງານ, ຄຳສະເໜີ ຕໍ່ກັບວຽກງານການເຄື່ອນໄຫວທີ່ຜ່ານມາ ຂອງບັນດາຫ້ອງການທີ່ກ່ຽວຂ້ອງ; ຈາກນັ້ນ, ປະທານກອງປະຊຸມໄດ້ມີບາງຄຳຖາມເຈາະຈີ້ມ ກ່ຽວກັບການປ້ອງກັນຊາດໃນຂອບເຂດບໍລິເວນຊາຍແດນເປັນຕົ້ນການປະສານງານລະຫວ່າງເມືອງກັບບັນດາກອງກຳລັງຫຼວງ, ບັນດາຈຸດຫຼໍ່ແຫຼມ, ຈຸດສັບສົນທີ່ແຂວງໄດ້ກຳນົດໄວ້, ບັນຫາການລັກລອບຂົນສົ່ງຢາເສບຕິດຕາມຂອບເຂດບໍລິເວນຊາຍແດນ, ການຄ້າຂາຍເຖື່ອນ ແລະ ການລັກລອບເຂົ້າອອກເມືອງແບບຜິດກົດໝາຍຂອງຄົນລາວ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ; ພ້ອມທັງມີການແລກປ່ຽນຄຳຄິດຄຳເຫັນ ແລະ ວິທີການແກ້ໄຂ; ພ້ອມນັ້ນ, ຍັງໄດ້ມອບນໍ້າດື່ມ 2 ຮອຍແພັກ ເປັນມູນຄ່າ 4 ລ້ານກີບ ໃຫ້ຄະນະນຳເມືອງເຊໂປນ ສືບຕໍ່ນຳໄປມອບຕໍ່ໃຫ້ກອງຮ້ອຍທະຫານຊາຍແດນ 321 ອີກດ້ວຍ.




# ທາງລົດ ທາງຄົນ

# ດົ້ນກົບເມກ

ໄລຍະຕົ້ນເດືອນກັນຍາມາຫາທ້າຍເດືອນ ບັນດາຜູ້ທຽວທາງໃຊ້ລົດ-ໃຊ້ຖະໜົນ ຄົງຈະເຂົ້າໃຈວ່າເປີດເທີມໃໝ່ຍ່ອມມີລົດຕິດແນ່ກໍຕ້ອງໄດ້ໃຊ້ຄວາມອົດທົນສູງຂຶ້ນ ແຕ່ສິ່ງສຳຄັນທີ່ສຸດກໍແມ່ນມາລະຍາດໃນການຂັບຂີ່ບໍ? ຢາກໃຫ້ເອົາໃຈໃສ່ລະບຽບການຂັບຂີ່ຫຼາຍຂຶ້ນ ຮູ້ຈັກເຄົາລົບອັນໃດເໝາະສົມ ຜູ້ມາກ່ອນກໍຄວນໃຫ້ເຂົາໄປກ່ອນ ເພາະມີບາງບ່ອນ ຜູ້ມາລຸນບໍ່ສົນໃຈ ມາລະຍາດແຊງໜ້າ ເຂົາໄປເລີຍກໍໜ້າຄິດ.

ທາງລົດ-ທາງຄົນ ນີ້ຜູ້ຂຽນຢາກເວົ້າເຖິງທາງລົດແລ່ນ ແລະ ທາງຄົນຍ່າງ; ສຳລັບທາງຄົນຍ່າງນັ້ນຈະເອີ້ນວ່າ: ບ່າໃຫຼ່ທາງ ສຳລັບໃຫ້ຄົນຍ່າງນີ້ ກໍແມ່ນສິ່ງສຳຄັນໃນຫຼາຍຕົວເມືອງສຳຄັນຂອງໂລກ ເຂົາກໍຈັດໃຫ້ເປັນລະບຽບ ເວົ້າສະເພາະເຂດຊຸມຊົນ-ເຂດໂຮງຮຽນ ຍົກຕົວຢ່າງ: ບ່ອນຊຸມຊົນທາງແຄບແນ່ ແຕ່ກໍມີໂຮງຮຽນ ບັນດານັກຮຽນທີ່ຂີ່ລົດມາຈອດລົງຍ່າງເຂົ້າໃນໂຮງຮຽນ ຫຼື ນັກຮຽນ ທີ່ຍ່າງມາແຕ່ເຮືອນ ບໍ່ໄກໂຮງຮຽນ ກໍຄວນໃຫ້ເຂົາມີທາງຍ່າງສະດວກ ເພາະຢູ່ທາງລົດຫຼາຍຢູ່ແລ້ວ ຖ້າບ່ອນໃຫຼ່ທາງຄົນຍ່າງບໍ່ມີ ກໍຍິ່ງສ່ຽງເກີດອຸບັດເຫດ ບໍ່ປອດໄພສຳລັບຄົນທຽວທາງຍ່າງ.

ຜູ້ຂຽນສັງລວມຈາກທາງສຽງກະຊິບມາ ທັງໄດ້ເຫັນກັບຕາບາງບ່ອນທາງຍ່າງ ແຕ່ບາງເຮືອນເຮັດຮົ້ວຫຍັບມາເກີນເຂດກໍມີຕັ້ງຖັງ-ໂຖໂອຊາມກັ້ນທາງຍ່າງບໍ່ໄດ້ກໍມີ ຖ້າວ່າເປັນແບບນີ້ກໍຮຽກຮ້ອງເຖິງການຈັດຕັ້ງກ່ຽວຂ້ອງ ໂດຍກົງຄວນກວດກາຂອບເຂດແຕ່ລະໝູ່ບ້ານວ່າ ເຮັດແນວໃດເຮົາຈະໄດ້ອຳນວຍຄວາມສະດວກແກ່ຜູ້ຍ່າງທຽວທາງ.

ຖ້າວ່າເຮົາຈະສ້າງໃຫ້ປະຊາຊົນໄດ້ອອກກຳລັງກາຍ ຮັກສາສຸຂະພາບໄປໃນໂຕ ກໍຄວນອຳນວຍຄວາມສະດວກທາງຍ່າງ-ການເບິ່ງແຍງບໍ່ທົ່ວເຖິງມັນກໍແມ່ນຂໍ້ບົກຜ່ອງຮີບດ່ວນແກ້ໄຂບໍ! ຜ່ານມາເຮົາເຫັນຂ່າວແກ້ໄຂເລື່ອງປ້າຍກໍຖືວ່າເຮັດໄດ້ດີ ແຕ່ທາງຍ່າງຍັງມີຫຼາຍບ່ອນເຫັນວ່າຕິບຕັນບໍ່ໄດ້ເອົາໃຈໃສ່ ໜ້າເຫັນໃຈນັກຮຽນທີ່ຍ່າງໄປໂຮງຮຽນບໍ! ສະເໜີເປັນຂໍ້ຄິດ.

# ສສຊ ແລະ ສສຂ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ທີ່ເມືອງຊົນນະບູລີ




(ສພຂ) -ວັນທີ 18 ກັນຍາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ພ້ອມຄະນະ ໄດ້ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ(ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ II ຢູ່ 2 ຈຸດຂອງເມືອງຊົນນະບູລີຄື: ບ້ານໃຫຍ່ຄຳປ່າແໜ ແລະສະໂມສອນຂອງເມືອງ; ນຳໂດຍທ່ານ ໄຊຍະເດດ ຟຸຍຍະວົງ ສສຊ ເຂດ 13; ໂດຍການຕ້ອນຮັບຂອງທ່ານ ສຸກສາຄອນ ໂພທິລາດ ກຳມະການພັກແຂວງ ເລຂາພັກເມືອງຊົນນະບູລີ ພ້ອມຄະນະພັກ-ຄະນະນຳຂອງເມືອງ, ມີພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ອຳນາດການປົກຄອງບ້ານ ຕະຫຼອດຮອດປະຊາຊົນຜູ້ມີສິດເລືອກຕັ້ງ ເຂົ້າຮ່ວມ.

ໃນເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບການນຳພາ-ຊີ້ນຳວຽກງານຮອບດ້ານໃນໄລຍະຜ່ານມາ ຂອງບ້ານໃຫຍ່ຄຳປ່າແໜ ແລະເມືອງຊົນນະບູລີ; ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ກໍ່ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ທີ່ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງຊາດ ແລະ ທ້ອງຖິ່ນ; ນອກນີ້ ຍັງໄດ້ລາຍງານຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຂ ສະຫວັນນະເຂດ ຊຸດທີ II ຕື່ມອີກ; ຈາກນັ້ນ, ກໍໄດ້ເປີດໂອກາດສະເໜີບັນຫາຄວາມຫຍຸ້ງຍາກ, ຂັດຂ້ອງໝອງໃຈທີ່ເກີດຂຶ້ນ ເພື່ອນຳໄປສະເໜີຕໍ່ຂັ້ນເທິງພິຈາລະນາແກ້ໄຂ.




# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນຢູ່ເມືອງລະມາມ



(ສພຂ) - ວັນທີ 3-4 ກັນຍາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ເຊກອງ ຊຸດທີ II ນຳໂດຍທ່ານ ພັອ. ສີດາວົງ ດວງປານີສສຊປະຈຳເຂດເລືອກຕັ້ງທີ16ແລະທ່ານ ໄຊຍະຫວັດ ກ້ອນຄຳໝັ້ນ ສສຂ ປະຈຳເຂດເລືອກຕັ້ງເມືອງລະມາມ ພ້ອມດ້ວຍຄະນະ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ຢູ່ 2 ບ້ານຂອງເມືອງລະມາມຄື: ບ້ານຖ້ຳເດັ້ງ ແລະ ບ້ານ ລະວີລຳພັນ ມີຜູ້ເຂົ້າຮ່ວມ 194 ຄົນ, ຍິງ 79 ຄົນ.

ໃນການລົງເຄື່ອນໄຫວ, ສສຊ-ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ IX ແລະ ສພຂ ເຊກອງ ຊຸດທີ II ທັງພົບປະໂອ້ລົມຕໍ່ຄະນະພັກ, ອຳນາດການປົກຄອງບ້ານ, ເຈົ້າໜ້າທີ່, ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງ ໃຫ້ສືບຕໍ່ຮັກສາສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ເພີ່ມທະວີຄວາມສາມັກຄີປອງດອງ, ມີປະຊາທິປະໄຕແລະມີຄວາມສະເໝີພາບຕໍ່ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ອະນຸລັກຮັກສາ ຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າ, ມີຄວາມດຸໝັ່ນຂະຫຍັນພຽນໃນການທຳການຜະລິດ ເປັນຕົ້ນດ້ານການປູກ-ການລ້ຽງ ໃຫ້ກຸ້ມກິນ ແລະ ກາຍເປັນສິນຄ້າ ເພື່ອສ້າງເສດຖະກິດຄອບຄົວໃຫ້ດີຂຶ້ນ ຄຽງຄູ່ກັບການເຝົ້າລະວັງ, ການຕ້ານ ແລະ ສະກັດກັ້ນ ບັນດາປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນກັບໄວໜຸ່ມ-ຊາວໜຸ່ມໃນປັດຈຸບັນ.

ພ້ອມນັ້ນ, ຍັງໄດ້ມອບວັດຖຸປັດໄຈ ແລະ ເຂົ້າສານຈຳນວນໜຶ່ງ ໃຫ້ອຳນາດການປົກຄອງບ້ານ ເພື່ອນຳໄປແຈກຢາຍໃຫ້ໂຮງຮຽນ ແລະ ຄອບຄົວທີ່ທຸກຍາກຂາດເຂີນ.

**(ນາງ ນາລີວັນ)**

# ຕິດຕາມກວດກາການກໍ່ສ້າງຕຶກອາຄານ ສະພາປະຊາຊົນແຂວງໄຊສົມບູນຫຼັງໃໝ່



(ສພຂ) - ວັນທີ 12 ກັນຍາຜ່ານມາ, ທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງໄຊສົມບູນ ພ້ອມດ້ວຍພາກສ່ວນທີ່ກ່ຽວແລະພະນັກງານຊ່ວຍວຽກ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະຊຸກຍູ້ ການກໍ່ສ້າງຕຶກອາຄານສະພາປະຊາຊົນແຂວງ (ສພຂ) ຫຼັງໃໝ່ ໂດຍການຮ່ວມເຮັດວຽກຂອງຜູ້ຮັບຜິດຊອບທາງດ້ານເຕັກນິກ ແລະ ແຜນຜັງ ຂອງບໍລິສັດ ເອທີໂອໂຕກໍ່ສ້າງຈຳກັດຜູ້ດຽວ.

ຜູ້ຮັບຜິດຊອບທາງດ້ານເຕັກນິກ ແລະ ແຜນຜັງ ຂອງບໍລິສັດ ເອທີໂອໂຕ ກໍ່ສ້າງ ຈຳກັດຜູ້ດຽວ ໄດ້ລາຍງານ ແລະ ນຳສະເໜີແຜນຜັງ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃນການກໍ່ສ້າງຕຶກອາຄານ ເຊິ່ງໃຫ້ຮູ້ວ່າ: ການກໍ່ສ້າງຕຶກອາຄານຂອງສະພາປະຊາຊົນແຂວງມີຄວາມລ້າຊ້າ; ຈາກນັ້ນ, ທ່ານ ຄຳພູທອນ ວົງພະຈັນ ໄດ້ເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນເອົາໃຈໃສ່ສືບຕໍ່ປັບປຸງແຜນຜັງເພີ່ມເຕີມ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີເນື້ອໃນສົມບູນຄົບຖ້ວນ ທັງປັບປຸງກົນໄກການຈັດຕັ້ງປະຕິບັດວຽກງານໃຫ້ແທດເໝາະກັບວຽກງານຕົວຈິງໃນການກໍ່ສ້າງ ເພື່ອໃຫ້ສຳເລັດຕາມແຜນການໃນຕົ້ນປີ 2026 ນີ້; ຈາກນັ້ນ, ກໍໄດ້ລົງພາກສະໜາມຕິດຕາມ, ກວດກາແລະເຂົ້າເບິ່ງຕົວຈິງໃນການກໍ່ສ້າງຕຶກອາຄານ ທັງພາຍໃນ ແລະ ພາຍນອກ ເພື່ອໃຫ້ໄດ້ຂໍ້ມູນຢ່າງລະອຽດ.

**(ນາງ ອຳໄພພອນ ແກ້ວວິໄລ)**



ສຸກສະບາຍຫາຍໂລດ

# ພູມຕ້ານທານ ສາມາດເສີມໄດ້ດ້ວຍໂພຊະນາການ

**# ຮຽບຮຽງໂດຍ: ທິວາກະທິ**



ພູມຕ້ານທານມີຄວາມສຳຄັນຫຼາຍຕໍ່ຮ່າງກາຍ ເພາະມີໜ້າທີ່ປ້ອງກັນພະຍາດ ແລະ ຊ່ວຍຟື້ນຟູຮ່າງກາຍໃຫ້ແຂງແຮງພາຍຫຼັງຈາກການເຈັບປ່ວຍ;ສະນັ້ນ, ຮ່າງກາຍຂອງເຮົາຈະແຂງແຮງ ຫຼື ບໍ່ນັ້ນ ມັນຂຶ້ນກັບພູມຕ້ານທານຂອງແຕ່ລະຄົນ.

ການກິນອາຫານທີ່ບໍ່ມີຄຸນຄ່າທາງສານອາຫານຈະທຳລາຍລະບົບພູມຕ້ານທານ ເຮັດໃຫ້ຮ່າງກາຍສ່ຽງຕໍ່ການເຈັບປ່ວຍ ພ້ອມທັງເປັນໄພຂົ່ມຂູ່ຈຸລັງໃນຮ່າງກາຍແລະພາໃຫ້ລະບົບພູມຕ້ານທານອ່ອນເພຍລົງ ເພາະມັນໜ້າທີ່ຄ້າຍຄືທະຫານຖ້າໄດ້ຮັບສານອາຫານທີ່ຄຸນຄ່າທາງສານອາຫານກໍຈະບໍ່ສາມາດປ້ອງກັນພະຍາດໄດ້ດີເທົ່າທີ່ຄວນ ເຊັ່ນ ອາຫານທີ່ມີແຄລໍຣີຫຼາຍຈາກນ້ຳຕານ, ຊີ້ນປະເພດຕ່າງໆ ແລະ ຜະລິດຕະພັນນົມທີ່ເຕັມໄປດ້ວຍໄຂມັນ ເຊິ່ງຈະເຮັດໃຫ້ເກີດບັນຫາສຸຂະພາບລວມທັງໂລກອ້ວນ ແລະພະຍາດຕ່າງໆ ທີ່ເກີດຈາກຄວາມຜິດປົກກະຕິຂອງຂະບວນການເຜົາຜານອາຫານ ເພາະເຮັດໃຫ້ລະບົບພູມຄຸ້ມກັນບໍ່ສົມດຸນ ແລະ ອ່ອນເພຍລົງ ນິໄສການກິນທີ່ບໍ່ມີສານອາຫານຈະທຳລາຍລະບົບພູມຕ້ານທານ ຄືກັບເວລາທີ່ສັດຕູໂຈມຕີ ແລະ ທຳລາຍປ້ອມຈົນກວ່າມັນແຕກ ແລະ ອາດຈະເຮັດໃຫ້ຮ່າງກາຍມີຄວາມສ່ຽງທີ່ຈະເປັນໂລກໃໝ່ ຫຼື ກັບມາເປັນພະຍາດທີ່ເຄີຍເປັນອີກ.

ໂພຊະນາການແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກຈຸລັງຂອງຮ່າງກາຍຕ້ອງການສານອາຫານປະເພດຕ່າງໆເຊັ່ນ

- ອາຫານກຸ່ມຫຼັກໄດ້ແກ່ໂປຣຕີນ, ຄາໂບໄຮເດດ ແລະ ໄຂມັນ;

- ກຸ່ມຮອງໄດ້ແກ່ວິຕາມິນ ແລະ ແຮ່ທາດ ແລະ ສຸດທ້າຍສານເຄມີທາງທຳມະຊາດ (phytonutrient)ທີ່ພົບໄດ້ໃນພືດເທົ່ານັ້ນ;

ເຮົາເຂົ້າໃຈດີເຖິງບົດບາດຄວາມສຳຄັນຂອງທາດໂປຣຕີນ ລວມເຖິງໄຂມັນທີ່ດີ ແລະ ຈຳເປັນ ເຊັ່ນ: ກົດໄຂມັນໂອເມກ້າ 3 ແລະ ເສັ້ນໃຍອາຫານ ທີ່ຊ່ວຍກະຕຸ້ນການເຮັດວຽກຂອງຈຸລິນຊີໃນລະບົບຍ່ອຍອາຫານ ນອກຈາກນີ້ຍັງລວມເຖິງວິຕາມິນ,ແຮ່ທາດແລະສານອາຫານໃນພືດທີ່ຊ່ວຍໃຫ້ຮ່າງກາຍແຂງແຮງ ແຕ່ແນະນຳໃຫ້ເພີ່ມວິຕາມິນ ແລະ ແຮ່ທາດ ເພື່ອເພີ່ມລະບົບພູມຕ້ານທານ.




# ພາບ ແລະ ຄວາມຈິງ

**# ແກ້ວຕາວັນ**

❊ ມ່ານໝອກຂາວທໍ່ຫຸ້ມ
ພາບຖ່າຍເຫັນງາມຕາ
ຕາມສາຍພູເຫວຫ້ວຍ
ຢາກຍ່າງເລາະລຽບຫຼິ້ນ
ຄູມປ່າໄພພະນາ
ດັ່ງອິງອິນປັ້ນ
ສວຍງາມທຸກຢ່າງ
ຕາມເຈື້ຍຫວ່າງພູ

❊ ຢາກຈະໄປຢູ່ຍັ້ງ
ຢູ່ກັບຊຸມແຊງຊາວ
ຢູ່ບົນດິນແດນເບື້ອງ
ມາຢອກສາວສໍ່ານ້ອຍ
ນອນນັ່ງເອົາແຮງ
ເຜົ່າຊົນຄົນໜ້ອຍ
ເມືອງເໜືອໜາວໝອກ
ຄຶງແມ້ງມ່ວນມັນ

❊ ເມື່ອໄດ້ເດີນດຸ່ງດັ້ນ
ຢູ່ພູຜາແສນຂຽວ
ມັນຊ່າງງາມຄືຄ້າຍ
ມວນໝອກໂລມລູບໄລ້
ມາມົ່ມອຍດູ
ທ່ຽວຈໍລະຈອນດັ້ນ
ເຮົາເຫັນໃນຮູບ
ໃຈຂ້ອຍຊື່ນບານ

❊ ຮຽມລອງເລາະລຽບບ້ານ
ງອຍຢູ່ເທິງພູເຂົາ
ມີຫຼັງຄາມຸງຫຍ້າ
ມີຫຼາຍຮູປ່ອງແປ້ວ
ຊົນເຜົ່າພູດອຍ
ຢຽດຍາວແຄມຫ້ວຍ
ທາງຝາເຕີມຕາບ
ເຫັນແລ້ວຄຶດອິນດູ

❊ ຊຸມເດັກເຂົານຸ່ງເສື້ອ
ໄປໂຮງຮຽນທັງໜາວ
ຮຽມເຫັນບາງຄົນນັ້ນ
ຢູ່ແຕ່ເຮືອນເບິ່ງນ້ອງ
ຜືນເກົ່າບາງໆ
ສັ່ນເຊັນຈົນສະບັ້ນ
ຜິງໄຟນຳແມ່
ຄອງຖ້າພໍ່ມາ

❊ ບໍ່ຢາກຈາວ່າເວົ້າ
ແຕ່ຮຽມຂໍພັນລະນາ
ວ່າຢູ່ພູເຂົາຄ້ອຍ
ບໍ່ໄດ້ເປັນດັ່ງດ້າມ
ເອົາອອກເຜີຍແບ
ບອກມາພໍຮູ້
ດອນດົງແດນເດັ່ນ
ຮຽມນີ້ວາດຫວັງ...ເພື່ອນເອີຍ!

# ຫັກຫາຍ ລະບາຍ



*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ຜ່ານ**ພົ້ນໄປແລ້ວສຳລັບ**ວັນປະກາດເອກະລາດແຫ່ງຊາດ** ໃນໂອກາດທີ່ໄດ້ໝູນວຽນ ມາບັນຈົບຄົບຮອບ **80 ປີ (12 ຕຸລາ 1945-12 ຕຸລາ 2025)** ຕິດແທດກັບການສ້າງສາພັດທະນາປະເທດຊາດໃນໄລຍະໃໝ່ 12 ຕຸລາເອກອ້າງ ຜົນງານໃຫຍ່ມີມາ ປອງປະຊາສຸກຂີ ຊື່ນຊົມຍ່ຍ້ອງ ປະກາດເອກະລາດກຶກກ້ອງ ໂລກາໄດ້ຮັບຊາບ ຜາບແພ້ຝູງມານກ່ອນກີ້ ລາວສຸກຂີລື່ນລົ້ນ ພັດທະນາກ້າວກວ່າຫຼັງ **ຊອບແລ້ວ!**

❊ **ຊົມ**ເຊີຍ**ວັນເຕັກສະຖານໂລກ** ທີ່ໄດ້ໝູນວຽນມາບັນຈົບ ຄົບຮອບ **33ປີ (1ຕຸລາ 1985-1ຕຸລາ 2025)** ເຊິ່ງໃນການສະເຫຼີມສະຫຼອງຄັ້ງນີ້ ແມ່ນຢູ່ພາຍໃຕ້ຫົວຂໍ້ "ການຕອບໂຕ້ວິກິດພາຍໃນຕົວເມືອງ" ພັກແນະນຳນອກຊີ້ ແນວທາງໃໝ່ນຳພາ ການພັດທະນາຍືນຍົງ ຄູ່ຄອບກັບສິ່ງແວດລ້ອມ ພ້ອມທັງມີແນວທາງຊີ້ ອະນຸລັກທຳມະຊາດ ເພື່ອໃຫ້ປະເທດບ້ານ ຈະເລີນກ້າວດັ່ງປະສົງ **ນັບແລ້ວ!**

## ຊອບຍິ້ມ

**# ພົ້ງລຶງ**

## ເລື່ອງ: ຂ້ອຍບໍ່ຮູ້

ຊາຍໜຸ່ມຄົນໜຶ່ງ ເຂົ້າໄປຊື້ຖົງຢາງອະນາໄມຢູ່ຮ້ານຂາຍຢາ, ແລ້ວບອກຄົນຂາຍຢາຢ່າງອາລົມດີວ່າ: ຊື້ຖົງຢາງແດ່ອັນໜຶ່ງ ເພາະມື້ນີ້ຄອບຄົວຜູ້ສາວນັດກິນເຂົ້າ, ບາງທີອາດຊິເກີດເຫດບໍ່ຄາດຝັນ.

ຄົນຂາຍຢາກໍຈັບໃຫ້ຖົງໜຶ່ງ, ຊາຍໜຸ່ມກໍຈັບເອົາແລ້ວຈ່າຍເງິນ; ຈາກນັ້ນ, ກໍຍ່າງອອກຈາກຮ້ານໄປ. ແຕ່ແລ້ວຊາຍໜຸ່ມກໍຍ່າງກັບຄືນມາຕື່ມ ແລ້ວບອກຄົນຂາຍວ່າ: ປ່ຽນເປັນກ່ອງໜຶ່ງສາເພາະວ່າແຟນຂ້ອຍມີນ້ອງສາວທີ່ໜ້າຕາໜ້າຮັກ ມັກມານັ່ງນຽດຂ້າງຂ້ອຍ ບາງທີ່ລາວອາດຊິມັກຂ້ອຍກໍເປັນໄດ້, ສ່ວນແມ່ຜູ້ສາວກໍຍັງສາວຢູ່ ແຖມຍັງເປັນຄົນຊອບຂ້ອຍໄປກິນເຂົ້າຢູ່ເຮືອນ ອາດຊິໄດ້ໃຊ້ຫຼາຍຢູ່.

ຈາກນັ້ນ, ຊາຍໜຸ່ມກໍອອກຈາກຮ້ານໄປເຮືອນຜູ້ສາວ, ນັ່ງລົງໂຕະກິນເຂົ້າ ໂດຍມີຜູ້ສາວ, ນ້ອງສາວຂອງຜູ້ສາວ ແລະ ແມ່ຂອງຜູ້ສາວ ແຕ່ຍັງບໍ່ທັນໄດ້ກິນເຂົ້າ, ພໍດີພໍ່ຂອງຜູ້ສາວກໍກັບມາເຮືອນພໍດີ; ຜູ້ສາວຈຶ່ງໃຫ້ຊາຍໜຸ່ມນຳສວດມົນກ່ອນກິນເຂົ້າ, ຊາຍໜຸ່ມຈຶ່ງຫຼັບຕາແລ້ວກໍເລີ່ມທ່ອງບົດສວດມົນ. ຜ່ານໄປ 10 ນາທີກໍຍັງບໍ່ແລ້ວ, ຜູ້ສາວຈຶ່ງຊົມໃສ່ຫູຄ່ອຍໆວ່າ: "ຂ້ອຍບໍ່ຮູ້ມາກ່ອນວ່າສວດມົນມັນຊິດົນປານນີ້"; ຊາຍໜຸ່ມກໍຕອບກັບຜູ້ສາວວ່າ: "ຂ້ອຍກໍບໍ່ຮູ້ມາກ່ອນ ວ່າພໍ່ເຈົ້າເປີດຮ້ານຂາຍຢາຢູ່ປາກຮ່ອມ".

## ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

"ຈົ່ງຮຽນຮູ້ຈາກອະດີດ ແລະ ໃຊ້ຊີວິດຢູ່ເພື່ອປັດຈຸບັນ"

ລັດຖະສະພາຕ່າງປະເທດ

# ສານສູງສຸດ Moldova ຢືນຢັນຜົນການເລືອກຕັ້ງລັດຖະສະພາ

(Xinhua) - ວັນທີ 16 ຕຸລາຜ່ານມາ, ສານລັດຖະທຳມະນູນໂມນດາວີ ໄດ້ຢືນຢັນຜົນຂອງການເລືອກຕັ້ງ ລັດຖະສະພາ ເມື່ອວັນທີ 28 ກັນຍາ 2025 ໂດຍໄດ້ຮັບຮອງເອົາສິດອຳນາດຂອງສະມາຊິກລັດຖະສະພາຊຸດໃໝ່ ທັງໝົດ 101 ທ່ານ ແລະ ເປີດທາງເພື່ອສ້າງຕັ້ງລັດຖະບານຊຸດໃໝ່.

ຕາມການນັບຄະແນນຄັ້ງສຸດທ້າຍ, ພັກແຫ່ງປະຕິບັດ ແລະ ຄວາມສາມັກຄີ (Party of Action and Solidarity - PAS) ໄດ້ 55 ທີ່ນັ່ງ ເຮັດໃຫ້ພັກມີສຽງສ່ວນຫຼາຍຢ່າງຈະແຈ້ງໃນລັດຖະສະພາ, ຕາມມາດ້ວຍພັກຮັກຊາດ 26 ທີ່ນັ່ງ, ພັກທາງເລືອກ 8 ທີ່ນັ່ງ, ພັກຂອງພວກເຮົາ ແລະ ພັກປະຊາທິປະໄຕ ໄດ້ພັກລະ 6 ທີ່ນັ່ງ.

ຕາມລັດຖະທຳມະນູນ, ລັດຖະສະພາຊຸດໃໝ່ຈະຖືກສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍເມື່ອປະທານາທິບໍດີຮຽກປະຊຸມພາຍໃນ 30 ວັນຫຼັງການເລືອກຕັ້ງ; ຈາກນັ້ນ, ສະມາຊິກລັດຖະສະພາຈະມີເວລາ 10 ວັນເພື່ອເລືອກຕັ້ງຜູ້ນຳລັດຖະສະພາ ແລະ ສ້າງຕັ້ງກຸ່ມຕ່າງໆ.

PAS ໄດ້ປະກາດໃຫ້ ອະເລັກຊານດຣູ ມຸນເຕຍນູ (Alexandru Munteanu) ນັກເສດຖະສາດ ແລະ ນັກທຸລະກິດ ເປັນຜູ້ສະໝັກເປັນນາຍົກລັດຖະມົນຕີ ໂດຍພັກຈະສ້າງຕັ້ງລັດຖະບານຊຸດຕໍ່ໄປຢ່າງເອກະລາດ.

ລັດຖະສະພາໂມນດາວີ ມີວາລະການດຳລົງຕຳແໜ່ງ 4 ປີ.



# ລັດຖະບານ Romania ອະນຸມັດຮ່າງກົດໝາຍ ສຳລັບຊາວໜຸ່ມເຂົ້າຮັບໃຊ້ກອງທັບໂດຍສະໝັກໃຈ



(Xinhua)-ວັນພະຫັດທີ 2 ຕຸລາຜ່ານມາ, ລັດຖະບານຣູມານີໄດ້ອະນຸມັດຮ່າງກົດໝາຍທີ່ອະນຸຍາດໃຫ້ຊາວໜຸ່ມເຂົ້າຮ່ວມການເຝິກທະຫານໂດຍສະໝັກໃຈ. ໂຄງການລິເລີ່ມນີ້, ປະກາດໂດຍ ອີໂອນັຕ ໂມສເຕອານູ (Ionut Mosteanu) ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ມີເປົ້າໝາຍເພື່ອບຸກຄົນອາຍຸ 18-35 ປີແລະເປັນສ່ວນໜຶ່ງຂອງຄວາມພະຍາຍາມໃນການປັບປຸງ ແລະ ຟື້ນຟູກຳລັງສຳຮອງທາງທະຫານຂອງປະເທດ ໃຫ້ທັນສະໄໝ.

ພາຍໃຕ້ກົດໝາຍທີ່ສະເໜີນີ້, ຜູ້ເຂົ້າຮ່ວມໂຄງການ ຈະຕ້ອງເຂົ້າຮັບໃຊ້ກອງທັບໂດຍສະໝັກໃຈ ເປັນເວລາສີ່ເດືອນ, ເຊິ່ງໃນລະຫວ່າງນັ້ນ ພວກເຂົາຈະໄດ້ສ້າງຄວາມລຶ້ງເຄີຍກັບປະຕິບັດການ ແລະ ຍຸດໂທປະກອນຂອງກອງທັບ; ຫຼັງຈາກການເຝິກອົບຮົມ, ພວກເຂົາຈະຍັງຄົງຢູ່ໃນກຳລັງສຳຮອງທາງທະຫານ ແລະໄດ້ຮັບເງິນອຸດໜູນທຽບເທົ່າກັບເງິນເດືອນສະເລ່ຍສາມເດືອນ.

ໂມສເຕອານູ ໄດ້ເນັ້ນໜັກເຖິງຄວາມຮີບດ່ວນຂອງການປະຕິຮູບ, ລະບຸວ່າກອງໜູນປະຕິບັດການຂອງຣູມານີ ກຳລັງຫຼຸດລົງ, ໂດຍມີທະຫານຫຼາຍກວ່າ 120,000 ຄົນ ທີ່ກຽມປົດປະຈຳການໃນປີນີ້ແລະຄາດວ່າ ຈະ ມີ ທະຫານ ເກືອບ 350,000 ຄົນ ອອກຈາກກຳລັງສຳຮອງ ພາຍໃນປີ 2027.

ກົດໝາຍສະບັບນີ້ ຍັງກຳນົດບົດບັນຍັດສຳລັບການເຝິກອົບຮົມບຸກຄະລາກອນທາງທະຫານຢູ່ບາງອົງການພົນລະເຮືອນທີ່ຂາດຄວາມສາມາດທາງທະຫານ.

ລັດຖະບານໄດ້ສະເໜີຮ່າງກົດໝາຍດັ່ງກ່າວຕໍ່ລັດຖະສະພາ ເພື່ອຂໍການພິຈາລະນາຢ່າງຮີບດ່ວນ ໂດຍມີຈຸດປະສົງທີ່ຈະປະກາດໃຊ້ໃນທ້າຍປີນີ້.

# ຮົງກົງ ອອກກົດໝາຍຄວບຄຸມ "ຫ້ອງພັກແບບກ່ອງເກີບ" ຫ້າມທີ່ຢູ່ອາໄສນ້ອຍກວ່າ 8 ຕາແມັດ




(AFP) - ຮົງກົງ ເລີ່ມນັບຖອຍຫຼັງເພື່ອກຳຈັດ "ຫ້ອງພັກແບບກ່ອງເກີບ" (shoebox flat) ໂດຍກົດໝາຍສະບັບໃໝ່ນີ້ ຈະມີຜົນບັງຄັບໃຊ້ໃນເດືອນມີນາ 2026 ເພື່ອຄວບຄຸມທີ່ຢູ່ອາໄສອັນຄັບແຄບຂອງໜຶ່ງໃນມະຫານະຄອນເຊິ່ງມີຄ່າຄອງຊີບແພງທີ່ສຸດໃນໂລກ.

ວັນສຸກທີ 3 ຕຸລາຜ່ານມາ, ລັດຖະບານຮົງກົງ ໄດ້ປະກາດລະບົບການລົງທະບຽນສຳລັບຫ້ອງພັກໃນຕຶກໃຫຍ່ນັບຕັ້ງແຕ່ວັນທີ 1 ມີນາ 2026 ແລະ ຈະຫ້າມຫົວໜ່ວຍທີ່ມີຂະໜາດນ້ອຍກວ່າ 8 ຕາແມັດ; ນອກຈາກນັ້ນ, ທີ່ຢູ່ອາໄສຂັ້ນພື້ນຖານຈະຕ້ອງໄດ້ມາດຕະຖານຄວາມປອດໄພ ແລະ ສຸຂະອະນາໄມ ເຊັ່ນ: ມີປ່ອງຢ້ຽມທີ່ເປີດໄດ້ຢ່າງໜ້ອຍ 1 ບານ, ອ່າງລ້າງໜ້າ ແລະ ຫ້ອງສຸຂາສ່ວນຕົວໃນພື້ນທີ່ປິດ.

ທາງການຄາດຄະເນວ່າ, ປັດຈຸບັນ ປະມານ 1 ໃນ 3 ຂອງທີ່ຢູ່ອາໄສໃນຮົງກົງ ມີຂະໜາດທີ່ບໍ່ໄດ້ມາດຕະຖານ ແລະ ຕ້ອງໄດ້ຮັບການປັບປຸງ.

ພາຍໃຕ້ກົດລະບຽບໃໝ່, ເຈົ້າຂອງທີ່ຢູ່ອາໄສຈະມີເວລາເຖິງປີ 2030 ເພື່ອຢັ້ງຢືນວ່າຫ້ອງພັກຂອງພວກເຂົາປະຕິບັດຕາມກົດລະບຽບໃໝ່; ການບັງຄັບໃຊ້ຈະເລີ່ມໃນປີ 2027 ໂດຍເຈົ້າຂອງທີ່ລະເມີດກົດໝາຍ ອາດຈະຖືກປັບໃໝເຖິງ 300,000 ໂດລາຮົງກົງ (ປະມານ 38,600 ໂດລາສະຫະລັດ) ແລະ ຈຳຄຸກ 3 ປີ.

ດ້ານກຸ່ມສະຫວັດດີການຮາກຖານ ໄດ້ສະແດງຄວາມກັງວົນວ່າເຈົ້າຂອງຫ້ອງພັກ ອາດຈະສົ່ງພາລະຄ່າໃຊ້ຈ່າຍໃນການປັບປຸງໃຫ້ກັບຜູ້ເຊົ່າ ເຊິ່ງຈະເຮັດໃຫ້ຄອບຄົວທີ່ມີລາຍໄດ້ຕໍ່າ ບໍ່ສາມາດຈ່າຍຄ່າເຊົ່າທີ່ສູງຂຶ້ນ ແລະ ຕ້ອງຖືກຂັບໄລ່ອອກໄປ.

# ລັດຖະສະພາອີຣານ ອະນຸມັດຕັດເລກສູນ 4 ຕົວ ອອກຈາກສະກຸນເງິນຂອງຊາດ



(Xinhua) - ວັນອາທິດທີ 5 ຕຸລາຜ່ານມາ, ສະມາຊິກລັດຖະສະພາອີຣານ ໄດ້ອະນຸມັດຮ່າງກົດໝາຍທີ່ຈະຕັດເລກສູນ 4 ຕົວອອກຈາກສະກຸນເງິນຂອງຊາດ ຫຼື ເງິນຣຽວ (rial), ຮ່າງກົດໝາຍດັ່ງກ່າວ ໄດ້ຮັບການຮັບຮອງໃນກອງປະຊຸມລັດຖະສະພາທີ່ເປີດເຜີຍດ້ວຍຄະແນນສຽງເຫັນດີ 144 ສຽງ, ຄັດຄ້ານ 108 ສຽງ ແລະ ງົດອອກສຽງ 3 ສຽງ (ລັດຖະສະພາອີຣານ ມີ 290 ທີ່ນັ່ງ); ຕາມການລາຍງານຂອງສຳນັກຂ່າວທາງການຂອງອີຣານ IRNA.

ຄະນະລັດຖະບານອີຣານ ໄດ້ລົງມະຕິເຫັນດີຕໍ່ແຜນການຕັດເລກສູນ 4 ຕົວ ອອກຈາກເງິນຣຽວເມື່ອເດືອນສິງຫາ, ການເຄື່ອນໄຫວດັ່ງກ່າວ ຍັງຕ້ອງໄດ້ຮັບການອະນຸມັດຈາກສະພາລັດຖະທຳມະນູນຂອງປະເທດ.

IRNA ລະບຸວ່າ ການຕັດເລກສູນ 4 ຕົວ ອອກຈາກເງິນຣຽວ ແມ່ນເພື່ອປັບປຸງປະສິດທິພາບຂອງທຸລະກຳທາງການເງິນ, ສະກຸນເງິນແຫ່ງຊາດຂອງອີຣານຈະຍັງຄົງເອີ້ນວ່າ ຣຽວ ໂດຍມີໜ່ວຍຍ່ອຍຂອງມັນເອີ້ນວ່າ ເກຣັນ (gheran).

ຫຼັງຈາກການຍົກເລີກ, 1 ຣຽວ ຈະເທົ່າກັບ 10,000 ຣຽວ ໃນອັດຕາແລກປ່ຽນປັດຈຸບັນ ແລະ ຈະຖືກແບ່ງອອກເປັນ 100 ເກຣັນ.

ຄ່າເງິນຂອງອີຣານ ໄດ້ອ່ອນຄ່າລົງຢ່າງຫຼວງຫຼາຍນັບຕັ້ງແຕ່ສະຫະລັດຖອນຕົວອອກຈາກຂໍ້ຕົກລົງນິວເຄລຍປີ 2015 ລະຫວ່າງ ເຕເຮຣານ ແລະ ບັນດາປະເທດທີ່ສຳຄັນຂອງໂລກ ໃນເດືອນພຶດສະພາ 2018, ຕາມມາດ້ວຍການກັບມາໃຊ້ມາດຕະການຂວ້ຳບາດອີຣານຂອງສະຫະລັດອີກຄັ້ງ.

# ຮ່ວມມືກັນກໍາຈັດຂີ້ເຫຍື້ອທາງນໍ້າ ເພື່ອສິ່ງແວດລ້ອມທີ່ສົດໃສ

❖ ວິເສດ ສະແຫວງສຶກສາ

ອ່ານຈົບບົດນີ້ແລ້ວ ທ່ານຜູ້ອ່ານຈະໄດ້ຮູ້ກ່ຽວກັບຄວາມພະຍາຍາມຂອງອິນໂດເນເຊຍ ໃນການກໍາຈັດຂີ້ເຫຍື້ອໃນນ່ານນໍ້າທະເລ ໂດຍສະເພາະແມ່ນຂີ້ເຫຍື້ອປະເພດຢາງ (ປະລາສະຕິກ) ທີ່ໃຊ້ພຽງຄັ້ງດຽວແລ້ວຖິ້ມ. ສໍາລັບເລື່ອງນີ້, ໃຜຮູ້ກ່ຽວກັບພູມີປະເທດຂອງອິນໂດເນເຊຍແລ້ວ ກໍຄົງບໍ່ແປກໃຈທີ່ທາງການຂອງປະເທດນີ້ ມີແຜນບຸກທະລຸກໍາຈັດຂີ້ເຫຍື້ອໃຫ້ສິ້ນຊາກໄປຈາກນ່ານນໍ້າທະເລ ເພາະວ່າປະເທດນີ້ ເປັນປະເທດເກາະດອນທີ່ໃຫຍ່ທີ່ສຸດໃນໂລກ; ແນ່ນອນຖ້າປ່ອຍໃຫ້ມີຂີ້ເຫຍື້ອໄຫຼຟູຢູ່ຕາມນ່ານນໍ້າທະເລແລ້ວ ກໍຄົງຈະເປັນບັນຫາໃຫຍ່ ເພາະມົນລະພິດທາງນໍ້ານັ້ນ ຮ້າຍແຮງກວ່າມົນລະພິດຢູ່ເທິງໜ້າດິນ ເພາະ 1. ມັນຈະທໍາລາຍບັນດາສັດນໍ້າ, 2. ມັນຈະເຈືອປົນອາຍນໍ້າທີ່ປິວໄປກວມເອົາທຸກໆພື້ນທີ່ ແລະ 3. ມັນຈະທໍາລາຍຄວາມງາມຂອງຊາຍຫາດທີ່ເປັນບ່ອນທ່ອງທ່ຽວຊັ້ນຍອດຂອງອິນໂດເນເຊຍ ແລະ ຂອງໂລກ ເຊັ່ນ: ເກາະບາຫຼີທີ່ລືລັ່ນວ່າເປັນສະຫວັນຂອງນັກທ່ອງທ່ຽວທົ່ວໂລກ, ເກາະລໍາບົກ ທີ່ມີຫາດຊາຍທີ່ງົດງາມຕະການຕາ.

ທ່ານຜູ້ອ່ານອາດຕັ້ງຄໍາຖາມວ່າ ແລ້ວມັນກ່ຽວຫຍັງກັບປະເທດພວກເຮົາທີ່ບໍ່ມີນໍ້າທະເລ? ກ່ຽວແທ້! ເພາະວ່າສາຍນໍ້າສໍາຄັນຢູ່ລາວນັ້ນ ໄຫຼລົງສູ່ນໍ້າຂອງ, ນໍ້າຂອງໄຫຼລົງສູ່ທະເລ; ຖ້າບັນດາສາຍເຊ ແລະ ສາຍຂອງຢູ່ລາວ ເຕັມໄປດ້ວຍຂີ້ເຫຍື້ອ ກໍຄືສິ່ງໂສໂຄກແລ້ວ ກໍຈະເຮັດໃຫ້ນ່ານນໍ້າທະເລເກີດມົນລະພິດ ແລະ ຢ່າລືມວ່າ ປະເທດລາວພວກເຮົາກໍເປັນພາຄີສົນທິສັນຍາວ່າດ້ວຍທະເລເຊັ່ນກັນ. ດັ່ງນັ້ນ, ການກໍາຈັດຂີ້ເຫຍື້ອຕາມແມ່ນໍ້າລໍາເຊຢູ່ບ້ານເຮົາ ກໍເທົ່າກັບວ່າພວກເຮົາໄດ້ຮ່ວມມືກໍາຈັດຂີ້ເຫຍື້ອໃນນ່ານນໍ້າທະເລ ແລະ ມະຫາສະໝຸດ.

ສໍາລັບອິນໂດເນເຊຍນັ້ນ ທາງການໄດ້ຕັ້ງເປົ້າໝາຍຫຼຸດຜ່ອນຂີ້ເຫຍື້ອໃນນ່ານນໍ້າທະເລ ໃຫ້ໄດ້ 70% ພາຍໃນປີ 2029. ໂຄງການກໍາຈັດຂີ້ເຫຍື້ອທາງທະເລຂອງອິນໂດເນເຊຍ ເນັ້ນຂີ້ເຫຍື້ອໃນບັນດາສາຂາຂອງແມ່ນໍ້າທີ່ໄຫຼລົງສູ່ທະເລ, ຂີ້ເຫຍື້ອຢູ່ຕາມແຄມທະເລທົ່ວປະເທດ, ຕາມບັນດາເກາະນ້ອຍ, ຕາມທ່າເຮືອ ແລະ ເຂດການເຄື່ອນໄຫວທາງທະເລຕ່າງໆ; ໂຄງການນີ້ ຢູ່ພາຍໃຕ້ການບັນຊາຂອງກະຊວງກິດຈະການທາງທະເລແລະການປະມົງ ໂດຍມີການສົມທົບກັບກະຊວງ, ບັນດາອົງການຂອງລັດທີ່ກ່ຽວຂ້ອງ, ແຂວງ, ອົງການທີ່ບໍ່ຂຶ້ນກັບລັດຖະບານ(NGO), ນັກສຶກສາ ແລະ ພາກເອກະຊົນ.

ອິນໂດເນເຊຍ ເປັນໜຶ່ງໃນບັນດາປະເທດທີ່ຕັ້ງຢູ່ເຂດທີ່ມີຂີ້ເຫຍື້ອທາງນໍ້າຫຼາຍເປັນລໍາດັບທີ 5 ຂອງໂລກ, ປະເທດລາວພວກເຮົາ ຄວນມີແຜນການແຕ່ເນີ່ນໆໄວ້ ກ່ຽວກັບການກໍາຈັດຂີ້ເຫຍື້ອທາງນໍ້າ ເພາະແມ່ນໍ້າເປັນບ່ອນລ້ຽງຊີບທີ່ສໍາຄັນຂອງພວກເຮົາ ທັງຕິດພັນກັບທຸກໆແຫຼ່ງທ່ອງທ່ຽວທີ່ສໍາຄັນອີກດ້ວຍ.




## ຄວບຄຸມບໍ່ໄດ້

*# ບ່າວກະບື*

**ນັກ**ປາໄສທ່ານໜຶ່ງມີຄໍາເຫັນເປັນພາສາອັງກິດຢູ່ກອງປະຊຸມວ່າ: "ທ່ານສຸພາບສະຕີ ແລະ ສຸພາບບຸລຸດທັງຫຼາຍ, ຜູ້ຂ້າຕ້ອງຂໍອະໄພກ່ຽວກັບສະພາບພາສາອັງກິດຂອງຕົນເອງ.

ສາຍສໍາພັນລະຫວ່າງຜູ້ຂ້າກັບພາສານີ້ ບໍ່ຕ່າງຫຍັງກັບສາຍສໍາພັນຂອງຜູ້ຂ້າກັບບາງເມຍ, ຜູ້ຂ້າຮັກລາວ ແຕ່ຫາກບໍ່ສາມາດບັນຊາລາວ"

## Out Of Control

*# BAOKBU*

A speaker at a meeting: said in English: "Ladies and Genglemen! I have to apologise for my English. My relationship to this language is the same as my relationship with my wife. I love her but cannot control her."







● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ສະການພະທາດຫຼວງ, ງານມະຫະກໍາກິລາແຫ່ງຊາດຄັ້ງທີXII, ການກະກຽມສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ ແລະ ຮ່າງແຜນການຈັດຕັ້ງປະຕິບັດຂໍ້ສະເໜີແນະຂອງຄະນະກໍາມະການສິດທິຄົນພິການສະຫະປະຊາຊາດ ທີ່ມີຕໍ່ ສປປ ລາວ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິຄົນພິການ. ໃນນັ້ນ, ຕໍ່ການແກ້ໄຂບັນຫາເສັ້ນທາງລົດເມດ່ວນ BRT ກອງປະຊຸມໄດ້ຊີ້ນໍາໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງສົມທົບກັບນະຄອນຫຼວງວຽງຈັນ ຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນກ່ຽວຂ້ອງ ໂດຍການເປັນປະທານຂອງທ່ານສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນໍາວຽກງານຂົງເຂດເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ເຊິ່ງບັນຫາສໍາຄັນແມ່ນໃຫ້ເກັບກໍາຂໍ້ມູນ ແລະ ປະເມີນຜົນທັງໄລຍະສັ້ນ ແລະ ໄລຍະຍາວຢ່າງລະອຽດ ເພື່ອເຮັດໃຫ້ເສັ້ນທາງ ກໍຄື ການບໍລິການລົດເມດ່ວນBRTຖືກນໍາໃຊ້ຢ່າງມີປະສິດທິຜົນສູງ; ສໍາລັບການກະກຽມບຸນນະມັດສະການພະທາດຫຼວງ, ງານມະຫະກໍາກິລາແຫ່ງຊາດ ຄັ້ງທີ XII ແລະ ການກະກຽມສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ: ກອງປະຊຸມໄດ້ຊີ້ນໍາໃຫ້ເອົາໃຈໃສ່ຕໍ່ການຮັກສາຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ສະອາດຈົບງາມ, ມີບັນຍາກາດຟົດຟື້ນມ່ວນຊື່ນບົນຈິດໃຈປະຢັດມັດທະຍັດ ທັງຮັກສາໄດ້ວັດທະນະທໍາຮີດຄອງປະເພນີອັນດີງາມຂອງຊາດ.ສ່ວນຮ່າງແຜນການຈັດຕັ້ງປະຕິບັດຂໍ້ສະເໜີແນະຂອງຄະນະກໍາມະການສິດທິຄົນພິການ ສປຊ ທີ່ມີຕໍ່ ສປປລາວກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິຄົນພິການ: ກອງປະຊຸມໄດ້ຊີ້ນໍາໃຫ້ກໍານົດຄົບຖ້ວນ ແລະ ລະອຽດຈະແຈ້ງ ຕໍ່ບັນດາພັນທະຂອງ ສປປລາວ ໃນວຽກງານດັ່ງກ່າວ ລວມທັງແຜນງົບປະມານຮັບໃຊ້ວຽກງານດັ່ງກ່າວໃຫ້ສອດຄ່ອງກັບຕົວຈິງ.

ວາລະທີ 3: ພິຈາລະນາຮ່າງແຜນຜັງຄົ້ນຄວ້າຄົ້ນຄວາມຖີ່ວິທະຍຸສື່ສານແຫ່ງຊາດສະບັບປີ 2025. ກອງປະຊຸມໄດ້ຊີ້ນໍາໃຫ້ພາກສ່ວນກ່ຽວຂ້ອງ ນໍາຮ່າງແຜນດັ່ງກ່າວ ໄປປັບປຸງຕາມການປະກອບຄໍາເຫັນຂອງສະມາຊິກລັດຖະບານ ໃຫ້ລະອຽດຈະແຈ້ງ, ຄົບຖ້ວນສົມບູນແລະສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ນອກນີ້, ຍັງໄດ້ພິຈາລະນາຮ່າງດໍາລັດວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະທາງລົດໄຟ,ແຕ່ເນື່ອງຈາກຮ່າງດໍາລັດສະບັບນີ້ ມີເນື້ອໃນຕິດພັນກັບຫຼາຍຂະແໜງການ ແລະ ຫຼາຍນິຕິກໍາທີ່ໄດ້ປະກາດນໍາໃຊ້ແລ້ວ; ສະນັ້ນ, ກອງປະຊຸມໄດ້ຊີ້ນໍາໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ນໍາໄປປຶກສາຫາລືເປັນເອກະພາບ ຮ່ວມກັບຂະແໜງການ ແລະ ພາກສ່ວນກ່ຽວຂ້ອງຕື່ມ ແລ້ວຈຶ່ງລາຍງານຫ້ອງວ່າການສໍານັກງານນາຍົກລັດຖະມົນຕີເພື່ອຂໍການພິຈາລະນາຈາກລັດຖະບານ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງມາຍັງບັນດາທ່ານສະມາຊິກລັດຖະບານ ຈົ່ງນໍາເອົາແຜນວຽກຈຸດສຸມເດືອນຕຸລາ ທີ່ກອງປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ, ບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສໍາເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ ໃຫ້ແຂງແຮງ ແລະ ໄດ້ຮັບຜົນດີ.

**(ຂ່າວ-ພາບ: ກົມປະຊາສໍາພັນ ຫສນຍ)**

**ຜູ້ຊີ້ນໍາ**
ທ່ານ ສີງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ